# ຂ່າວໃບລານ

ໂຄງການປົກປັກຮັກສາໜັງສືໃບລານລາວ ການຮ່ວມມືລາວ-ເຢຍຣະມັນ ປີທີ VII ສະບັບທີ 14* ມີນາ-ມິຖຸນາ 1999
PRESERVATION OF LAO MANUSCRIPTS PROGRAMME, LAO-GERMAN COOPERATION March-June 1999













# ມຸ່ງໜ້າສູ່ ດິນແດນວິລະຊົນ

*ພ. ທິງສັກສິດ*









ພໍແລ່ນຜ່ານເຂດແດນເມືອງໄຊໄປແລ້ວ ລົດກໍ່ເຂົ້າສູ່ດິນແດນມະຫັດສະຈັນອີກແຫ່ງໜຶ່ງ ເຊິ່ງມີພູຜາອັນສູງຊັນ ປ່າດົງອັນກວ້າງໃຫຍ່ໄພສານ. ເສັ້ນທາງລະອຽດລະອໍ້ຽວ ຜ່ານໄປຕາມຮ່ອມພູ, ເປີ້ນພູ ແລະສັນພູ. ອາກາດຄ່ອຍໆໜາວເຢັນເຂົ້າໄປເລື້ອຍໆ. ເມກໝອກເຄື່ອນຕົວຢ່າງຊ້າໆ ເໝືອນກັບວ່າລົດຂອງເຮົາກຳລັງແລ່ນຢູ່ເທິງກ້ອນເມກ ແລະ ໝອກທີ່ໜາຕຶບ ທີ່ຫຸ້ມພູຜານັ້ນລະ.

ຂ້ອຍເອງຮູ້ສຶກວ່າ ທຳມະຊາດເມືອງລາວເຮົາຍັງອຸດົມສົມບູນຢູ່. ສັດສາວາສິ່ງຍັງຫລວງຫລາຍພາຍມາກ ສິ່ງສຽງຮ້ອງເໝືອນກັບກັບດົນຕີອີກແບບໜຶ່ງ ບັນເລງກ່ອມອາລົມຂອງຜູ້ຄົນທີ່ກຳລັງເດີນທາງອັນຍາວໄກນັ້ນ ໃຫ້ເບີກບານມ່ວນຊື່ນ ອອນຊອນລອຍໄປຕາມທຳມະຊາດອັນແສນມີຄ່າ ແລະ ສວຍສົດງົດງາມ.

ດິນແດນແຂວງນັ້ນ ແມ່ນຕັ້ງຢູ່ເໜືອສຸດຂອງປະເທດເຮົາ ໃຜໆກໍ່ຄົງຮູ້ດີ ນັ້ນກໍ່ຄື "**ຜົ້ງສາລີ ດິນແດນວິລະຊົນ**".

ຜົ້ງສາລີກໍ່ເປັນແຫ່ງໜຶ່ງ ທີ່ມີຊື່ສຽງທາງດ້ານປະຫວັດສາດຂອງການປະຕິວັດລາວ. ເປັນແຂວງໜຶ່ງໃນສອງແຂວງເຕົ້າໂຮມ. ເປັນແຂວງທີ່ໝັ້ນທາງດ້ານການເມືອງ, ການທະຫານ ໃນສະໄໝຕໍ່ສູ້ກູ້ຊາດ ຕ້ານກັບສັດຕູຕ່າງດ້າວ ຈົນໄດ້ຮັບໄຊຊະນະ ແລະ ປົດປ່ອຍປະເທດຊາດໄດ້ ໃນປີ 1975. ດັ່ງນັ້ນ ແຂວງຜົ້ງສາລີຈຶ່ງເກີດມີວິລະບູລຸດ, ວິລະຊົນແຫ່ງຊາດ ຢ່າງຫລວງຫລາຍ.

ດິນແດນດັ່ງກ່າວນີ້ ມີວັດທະນະທຳ, ຮີດຄອງປະເພນີ, ວັດວາສາສະໜາ, ພະສົງອົງຄະເຈົ້າ, ວັດຖຸບູຮານເກົ່າແກ່ຫລາຍຢ່າງ ແລະ ມີຄຳພີຕ່າງໆ ເຊິ່ງເພິ່ນໄດ້ຂຽນໄວ້ໃນຫີນສີລາ, ງາຊ້າງ ເຂົາຄວາຍ, ໄມ້ໄຜ່, ໃບລານ ແລະ ເຈ້ຍສາ. ແຕ່ໜ້າເສຍດາຍທີ່ສຸດ ສິ່ງມີຄ່າດັ່ງກ່າວນັ້ນ ໄດ້ຖືກທຳລາຍ ແລະ ເສຍຫາຍໄປຈຳນວນຫລວງຫລາຍໃນປາງສົງຄາມ ເພາະວ່າປະຊາຊົນໄດ້ຍົກຍ້າຍໜີໄພສົງຄາມ ປະບ້ານ ປະວັດວາອາຣາມ ກາຍເປັນບ້ານຮ້າງວັດຮ້າງ ເຮັດໃຫ້ຄົນບໍ່ດີຈຳນວນໜຶ່ງ ສວຍໂອກາດລັກເອົາວັດຖຸຂອງມີຄ່າໄປຂາຍ. ນອກຈາກນັ້ນ ກໍ່ຖືກລະເບີດເຜົາຜານໄປຢ່າງວອດວາຍ.

ເພື່ອບໍ່ໃຫ້ວັດຖຸທີ່ມີຄ່ານີ້ ສູນເສຍໄປຊໍ້າແລ້ວຊໍ້າເລົ່າ ທາງໂຄງການປົກປັກຮັກສາໜັງສືໃບລານລາວ. ຈຶ່ງມີແຜນການເກັບກູ້ ແລະອະນຸລັກຮັກສາ ຕາມວັດວາອາຣາມຕ່າງໆ ທີ່ຍັງເຫລືອຢູ່ນັ້ນໄວ້. ໜ່ວຍສຳຫລວດຂອງໂຄງການ ໄດ້ລົງໄປຄົ້ນຄວ້າຕົວຈິງ ແຕ່ວັນທີ

12/2 ຫາວັນທີ 29/3/1998. ນຳພາໂດຍ ທ່ານບຸນເລີດ ທຳມະຈັກ ແລະ ຄະນະອີກສາມຄົນ. ພາຍໃນຫ້າຕົວເມືອງ ຄື: ເມືອງບຸນເຫນືອ, ຜົ້ງສາລີ, ບຸນໃຕ້, ຂວາ ແລະ ສຳພັນ. ໃນຈຳນວນ 30 ວັດ ມີເອກະສານໃບລານທັງຫມົດ 3.591 ຜູກ, ຟັບສາ 630 ເຫລັ້ມ.

ຜ່ານການລົງສຳຫລວດຄັ້ງນີ້ ທີມງານພວກເຮົາ ໄດ້ຂຶ້ນບັນຊີຫນັງສືຜູກໃບລານ ແລະ ຟັບສາ ໃນຫ້າຕົວເມືອງຄື :

+ **ຈຸດທີ 1:** ທີ່ເມືອງບູນເຫນືອ 13 ວັດ, ສຳຫລວດໄດ້ 784 ຜູກ, ຟັບສາ 261 ເຫລັ້ມ.
+ **ຈຸດທີ 2:** ທີ່ເມືອງຜົ້ງສາລີ 5 ວັດ, ສຳຫລວດໄດ້ 617 ຜູກ, ຟັບສາ 166 ເຫລັ້ມ.
+ **ຈຸດທີ 3:** ແມ່ນເມືອງບຸນໃຕ້ 4 ວັດ, ສຳຫລວດໄດ້ 828 ຜູກ, ຟັບສາ 136 ເຫລັ້ມ.
+ **ຈຸດທີ 4:** ຢູ່ເມືອງຂວາ 8 ວັດ, ມີຫນັງສືຜູກໃບລານ 670 ຜູກ.
+ **ຈຸດທີ 5:** ຢູ່ເມືອງສຳພັນ 1 ວັດ ມີຫນັງສືຜູກໃບລານ 682 ຜູກ.

ຮວມຫນັງສືໃບລານທັງຫມົດທີ່ສຳຫລວດໄດ້ ມີ 3.591 ຜູກ, ຟັບສາ 630 ເຫລັ້ມ.

ເມື່ອໂຄງການລົງໄປຮອດບ້ານໃດ ຊາວບ້ານ ກໍ່ຄືຄະນະຮັບຜິດຊອບວຽກງານດັ່ງກ່າວ ໄດ້ໃຫ້ການຮ່ວມມືຢ່າງຮອບດ້ານ ເຊັ່ນ: ການອະບາໄມ, ໃຫ້ບ່ອນພັກພາອາໄສຊົ່ວຄາວ ນອກຈາກນັ້ນ ເຂົາເຈົ້າກໍ່ໄດ້ເຕົ້າໂຮມເອົາເຖົ້າແກ່ຍິງຊາຍນ້ອຍໃຫຍ່ ມາຟັງການອະທິບາຍຂອງຫົວຫນ້າຫນ່ວຍສຳຫລວດ ກ່ຽວກັບຈຸດປະສົງການລົງມາເຮັດວຽກ ຂອງໂຄງການ ແລະຮີດຄອງປະເພນີຕ່າງໆ ເຊັ່ນ: ການນັບຖືຮີດຄອງທາງຜີ ແລະພຸດ, ພວກເຂົາເຈົ້າກໍ່ໄດ້ເຂົ້າໃຈຢ່າງແຈ່ມແຈ້ງ.

ເຈົ້າຫນ້າທີ່ວັດທະນະທຳແຂວງ, ເມືອງ ແລະ ປະຊາຊົນໃນແຕ່ລະບ້ານ ໄດ້ໃຫ້ຄວາມສົນໃຈຫລາຍຕໍ່ວຽກງານຂອງໂຄງການ ພວກເຂົາເຈົ້າໄດ້ຍ້ອງຍໍສັນລະເສີນວ່າ "*ບໍ່ເຄີຍມີໂຄງການໃດ ທີ່ມາຟື້ນຟູວັດວາສາສະຫນາ ແລະ ຮີດຄອງປະເພນີ ຄືໂຄງການໃບລານນີ້*".

+ **ທ່ານຄຳເຕົ້າ ແສນຍອດ** ວັດທະນະທຳແຂວງຜົ້ງສາລີ ເວົ້າວ່າ "*ໂຄງການປົກປັກຮັກສາຫນັງສືໃບລານລາວ ບໍ່ພຽງແຕ່ຄົ້ນຄວ້າສຳຫລວດຂຶ້ນບັນຊີ ແລະ ປົກປັກຮັກສາເທົ່ານັ້ນ, ທາງໂຄງການໄດ້ນຳເອົາພູມປັນຍາ, ຄວາມຮູ້ຄວາມສາມາດ ທີ່ມັນໄດ້ເຊື່ອງຊ້ອນໄວ້ໃນໃບລານ ແລະຟັບສານັ້ນ ມາສູ່ພວກຂ້າພະເຈົ້າ, ໂຄງການນີ້ ໄດ້ເປີດສັກກະຫລາດໃຫມ່ທາງດ້ານວັດທະນະທຳຢ່າງຈະແຈ້ງ*".

+ **ທ່ານໄມຄຳເສົາ** ເຈົ້າເມືອງໆບຸນເຫນືອ ກໍ່ໄດ້ໃຫ້ທັດສະນະວ່າ: "*ໂຄງການໃບລານລາວ ໄດ້ນຳເອົາມໍລະດົກທາງດ້ານວັດທະນະທຳມາສູ່ຊາວເມືອງບຸນເຫນືອ ພວກຂ້າພະເຈົ້າ*".

+ **ທ່ານອາແຟ ອາໄນລີ** ເຈົ້າເມືອງໆບຸນໃຕ້ ໃຫ້ຄຳເຫັນວ່າ: "*ໂຄງການໃບລານລາວ ແມ່ນໂຄງການຫນຶ່ງທີ່ໄດ້ຄົ້ນຄວ້າເອົາຄວາມຮູ້ຄວາມສາມາດສະຫລາດຫລັກແຫລມ ອອກມາຈາກຫນັງສືຜູກໃບລານ ແລ້ວນຳອອກມາພິມເຜີຍແຜ່ ໃຫ້ພວກຂ້າພະເຈົ້າຮຽນຮູ້ ກ່ຽວກັບທິດທາງສາສະຫນາ ແລະ ຮີດຄອງປະເພນີຢ່າງຈະແຈ້ງ*".

ແນ່ນອນ ໂຄງການປົກປັກຮັກສາຫນັງສືໃບລານລາວ ຈະຢືນຢູ່ຄຽງຂ້າງປະຊາຊົນທຸກຊົນຊາດຊົນເຜົ່າ ຕະຫລອດໄປ ເພື່ອປົກປ້ອງມູນມໍລະດົກຂອງບັນພະບຸລຸດ ປູ່ຍ່າ ຕາຍາຍ ທີ່ໄດ້ກ່າຍທອດວິຊາຄວາມຮູ້ ໄວ້ໃນໃບລານນັ້ນ ໃຫ້ຄົງຢູ່ຈີນຮອດຊົ່ວລູກຊົ່ວຫລານ.

❀ ❀ ❀ ❀

**ຫນ້າປົກ :** ຮູບການເຄື່ອນໄຫວທີ່ແຂວງຜົ້ງສາລີ

| | |
|---|---|
| 1 | 2 |
| 3 | 4 |
| 5 | 6 |

1. ພິທີແຫ່ທຳ ທີ່ບ້ານສິນໄຊ ເມືອງຂວາ ແຂວງຜົ້ງສາລີ
2. ຫົວທັດ ເມືອງບຸນໃຕ້ ແຂວງຜົ້ງສາລີ
3. ວັດບ້ານນາຫວາຍ ເມືອງບຸນໃຕ້ ແຂວງຜົ້ງສາລີ
4. ຄະນະຮັບຜິດຊອບໂຄງການ ຢ້ຽມຢາມເຈົ້າເມືອງ ເມືອງຂວາ ແຂວງຜົ້ງສາລີ
5. ພະສົງ ແລະ ປະຊາຊົນ ເຮັດອະນາໄມໃບລານ
6. ວັດບ້ານເມືອງຮຸນ ເມືອງສຳພັນ ແຂວງຜົ້ງສາລີ

*ພາບໂດຍ* □ **ໄພວົງ ທົງສັກສິດ**

## ເຊີນອ່ານ


- ຜົ້ງສາລີ ດິນແດນເຕົ້າໂຮມ ...
- ໄນໂລຟິມ ... ບົດບາດໃນການອະນຸລັກຫນັງສືໃບລານ
- ສູ່ດິນແດນບໍ່ແກ້ວ
- ປີສຸດທ້າຍທີ່ຫລວງພະບາງ ...
- ທວນຄືນ ຜົນສຳເລັດໃນ 1 ປີ
- ນິຕິທັມຄຳກອນ ......

# ຜົ້ງສາລີ ດິນແດນເກົ່າໂຮມ ແຫ່ງການປະຕິວັດ

ໂດຍ : *ບຸນເລີດ ທຳມະຈັກ*

ບໍ່ແມ່ນເຫດບັງເອີນ ທີ່ໂຄງການປົກປັກຮັກສາຫນັງສືໃບລານລາວ ໄດ້ຂຶ້ນໄປເຄື່ອນໄຫວສຳຫລວດກວດກາ ແລະ ອະນຸລັກຮັກສາຄຳພີດີກາ ຫນັງສືຜູກໃບລານ ທີ່ແຂວງພາກເຫນືອສຸດຂອງປະເທດ ເຊິ່ງເປັນເຂດເຕົ້າໂຮມສອງແຂວງພາກເຫນືອ ໃນສະໄຫມເຮັດການປະຕິວັດ ເພື່ອກຳຈັດສັຽນຫນາມຂອງປະເທດ ໄດ້ກາຍເປັນໃບຫນ້າໃຫມ່ ແຫ່ງການປົດປ່ອຍຊາດໄດ້ຮັບເອກະລາດ ແລະ ປະຊາທິປະໄຕ ປະຊາຊົນຈົນມາຮອດປັດຈຸບັນ, ສິ່ງສຳຄັນທີ່ຫນ່ວຍງານການສຳຫລວດ



ເອກະສານໃບລານຢູ່ແຂວງຜົ້ງສາລີ ແມ່ນສືບຕໍ່ຈາກກອງປະຊຸມຄັ້ງວັນທີ 9-11/3/1997 ທີ່ເມືອງຂວາດິນແດນທີ່ຫມັ້ນໃກ້ຝັ່ງນ້ຳອູ ທີ່ຍາວຢຽດລົງສູ່ສາຍຂອງ.

ຫນ່ວຍງານການສຳຫລວດໄດ້ອອກເດີນທາງ ວັນທີ 10/2/98 ຜ່ານເສັ້ນທາງທີ່ລະອຽດລະອ້ຽວ ຈາກວຽງຈັນສູ່ຫລວງພະບາງ, ອຸດົມໄຊ ໂດຍເສັ້ນທາງເລກທີ 13 ເຫນືອ ຮອດທາງແບ່ງປາກນ້ຳນ້ອຍ ເປົ້າຫມາຍກໍ່ແມ່ນເລັ່ງໃສ່ແຂວງຜົ້ງສາລີ ເປັນຈຸດຕັ້ງຕົ້ນ ໃນໂອກາດນີ້ພວກເຮົາກໍໄດ້ປຶກສາໂອ້ລົມກັບຫົວຫນ້າພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງ ເຊິ່ງແມ່ນສະຫາຍ ທອງຍິນ ຄູນສະຫງ່າ ເປັນຜູ້ວ່າການແທນ ແລະ ຕົກລົງເອົາເມືອງບຸນເຫນືອເປັນຈຸດເລີ່ມຕົ້ນ. ຫລັງຈາກໄດ້ເຂົ້າພົບທ່ານໄມຄຳເສົາ ເຈົ້າເມືອງເມືອງບຸນເຫນືອ ພວກເຮົາກໍໄດ້ແບ່ງຈຸດທີ່ຈະລົງເຄື່ອນໄຫວ 3 ແຫ່ງຄື: ເຂດບຸນເຫນືອ (ເທສະບານເມືອງ) ເຊິ່ງມີ 6 ຫມູ່ບ້ານ ອ້ອມຂ້າງເທສະບານ ແຕ່ມີເອກະສານວັດລະເລັກລະນ້ອຍ ພວກເຮົາໃຊ້ເວລາ 3 ວັນ ກໍສາມາດສຳເລັດການກວດກາຂຶ້ນບັນຊີ ແລະ ປົກປັກຮັກສາເອກະສານໄວ້ໄດ້ 218 ຜູກ. ຈາກນັ້ນ ກໍໄດ້ເຄື່ອນລົງໄປສູ່ເຂດບ້ານຍໍ້ ເຊິ່ງເປັນຈຸດທີສອງຂອງເມືອງ ແລະ ເປັນເສັ້ນທາງແຍກລະຫວ່າງບຸນໃຕ້ ແລະ ໄປສູ່ຊາຍແດນຈີນ ບ້ານຍໍ້ເປັນບ້ານຊົນເຜົ່າລື້ ສ່ວນຫລາຍມີອາຊີບເຮັດໄຮ່ ແລະ ນາຈຳນວນນຶ່ງ ແຕ່ກໍມີຄວາມສາມັກຄີກັນດີ ມີການຄ້າຂາຍຕາມສົມຄວນ ເພາະເປັນເສັ້ນທາງຜ່ານລະຫວ່າງເມືອງ ແລະ ຕໍ່ເຂດປ່າຄາ (ຊາຍແດນລາວ-ຈີນ) ມີວັດ ແລະ ສາທຸພໍ່ອົງຫນຶ່ງ, ພະນ້ອຍ (ຈົວ) 6 ອົງ ການສ້າງສາວັດວາຢູ່ໃນສະພາບດີສົມຄວນ ສະເພາະແລ້ວ ການຈັດຕັ້ງບ້ານ ແລະ ເຖົ້າແກ່ແນວໂຮມເອົາໃຈໃສ່ຕໍ່ຮີດຄອງປະເພນີດີ ມີວັດຊຽງຟ້າ (ຈຽງຟ້າ) ເຂົ້າຮ່ວມນຳ ຈຸດນີ້ສຳຫລວດໄດ້ເອກະສານຈຳນວນ 165 ຜູກ, ພັບສາ 81 ເຫລັ້ມ. ຈຸດພິເສດໃນເຂດນີ້ ປະຊາຊົນກຳລັງເກັບກູ້ອ້ອຍ ຊຶ່ງມີສັນຍາປູກ ແລະ ຂາຍໃຫ້ພວກຈີນມາເກັບຊື້ ມື້ນຶ່ງໆ ບໍ່ຕ່ຳກວ່າ 20 ຄັນລົດ ແລະ ຂົນສົ່ງໃຫ້ໂຮງງານນ້ຳຕານທີ່ປະເທດຈີນ ປະຊາຊົນມີລາຍໄດ້ດີ ຕາມທີ່ຮູ້ລາຄາອ້ອຍໂຕນລະ 35 - 40 ພັນກີບ.





ຈາກນັ້ນຫນ່ວຍງານກໍໄດ້ເລັ່ງໃສ່ເຂດເຫນືອສຸດຂອງເມືອງ ຄື ບ້ານງາຍເຫນືອເປັນບ້ານຊົນເຜົ່າລື້ທີ່ເກົ່າແກ່ ແລະ ດັ້ງເດີມ ງາຍເຫນືອເປັນບ້ານທີ່ຕັ້ງຢູ່ແຄມນ້ຳງາຍ ປະຊາຊົນນຳໃຊ້ສາຍນ້ຳເພື່ອການປູກຝັງ ແລະ ເຮັດໄຟຟ້ານ້ຳຕົກຂະຫນາດນ້ອຍນຳໃຊ້ໃນຄອບຄົວ ເຊິ່ງຄິດລາຄາເຄື່ອງຫນຶ່ງປະມານ 75-80 ພັນກີບ, 2-3 ຄອບຄົວຕໍ່ເຄື່ອງຫນຶ່ງກໍພໍໄດ້ໄຕ້ໄຟແຮງທຽນ ຄອບຄົວລະດອກ.

ຈຸດພິເສດງາຍເຫນືອເປັນບ້ານບູຮານ ມີການຢູ່ກິນ ແລະ ລ້ຽງສັດແບບທຳມະຊາດ ໂດຍສະເພາະ ການລ້ຽງຫມູ-ໄກ່ ແລະ ແບ້ເກືອບວ່າທຸກໆເຮືອນ ເຮັດໃຫ້ການໄປມາຂອງສັດລ້ຽງບໍ່ຄ່ອຍເປັນລະບຽບ ແຕ່ວ່າບ້ານຢູ່ເຂດເນີນສູງ ຄືງຈະບໍ່ມີບັນຫາໃນຍາມຝົນ ສ່ວນວັດແມ່ນເກົ່າແກ່ກວ່າ 200 ປີມາແລ້ວ ແຕ່ກໍຍັງບໍ່ມີພະສົງຢູ່ປະຈຳ ສ່ວນຫລາຍຈະພັກເຊົາຊົ່ວລະດູຝົນ ແລ້ວກໍເດີນທຸດົງໄປແຫ່ງອື່ນ ບາງປີກໍຂາດທັງແລ້ງທັງຝົນ.

ງາຍເຫນືອເປັນບ້ານເກີດຂອງທ່ານ ອຸ່ນຈັງ ຮອງເຈົ້າແຂວງຜົ້ງສາລີ, ມີພໍ່ເຖົ້າປູ່ມັງຄະລະ ແລະ ແມ່ເຖົ້າຍ່າ ເຊິ່ງເປັນຜູ້ຊົງຄຸນວຸດທິຂອງບ້ານນີ້ ການຈັດຕັ້ງ ແລະ ສະຫະພັນແມ່ຍິງ ຕ່າງກໍໄດ້ໃຫ້ຄວາມສົນໃຈ ແລະ ຊຸກຍູ້ຊ່ວຍເຫລືອໃນການອະນາໄມໃບລານ ໃຊ້ເວລາ 3 ວັນ ພວກເຮົາກໍສຳເລັດແລ້ວ ແລະ ເກັບກຳໄດ້ຈຳນວນ 314 ຜູກ, ພັບສາ 104 ເຫລັ້ມ. ພວກເຮົາອອກຈາກງາຍເຫນືອ ຜ່ານເສັ້ນທາງທີ່ກຳລັງບຸກເບີກຂອງບໍລິສັດຈີນທີ່ຮັບເຫມົາ ໄປເຖິງອູໃຕ້ໄລຍະທາງປະມານ 36 ກິໂລແມັດ ແຕ່ກໍຫຍຸ້ງຍາກລຳບາກພໍສົມຄວນ ຫາກວ່າເສັ້ນທາງສາຍນີ້ຍັງບໍ່ສຳເລັດ ບໍ່ອາດຈະຜ່ານໄປຫາເມືອງຍອດອູໄດ້ ຈຶ່ງຂໍໂຈະໄວ້ ໃນໂອກາດຫນ້າຕໍ່ໄປ.



ພວກເຮົາໄດ້ຈາກງາຍເຫນືອ ໃນວັນທີ 23 ກຸມພາ ມາເຖິງເທສະບານແຂວງຜົ້ງສາລີ ໂດຍມີສະຫາຍ ຄຳເຕົ່າ ແສນຍອດ ນັກວັດທະນະທຳຊົນເຜົ່າລາວ (ຜູ້ນ້ອຍ) ໄດ້ຜ່ານຊີວິດທະຫານ ແລະ ຝ່າຍປົກຄອງມາກວ່າ 30 ປີແລ້ວ ເປັນຜູ້ນຳພາ. ພວກເຮົາໄດ້ເຂົ້າພົບ ທ່ານທອງຍົນ ຄຸນສະຫງ່າ ວ່າການແທນຫົວຫນ້າພະແນກກະແຫລງຂ່າວ ແລະ ວັດທະນະທຳແຂວງ ຈາກນັ້ນ ໄດ້ສົມທົບກັບຫ້ອງການກະແຫລງຂ່າວ ແລະ ວັດທະນະທຳເມືອງຜົ້ງສາລີ, ເລີ່ມຕົ້ນພວກເຮົາກໍໄດ້ແບ່ງເປັນ 3 ຈຸດຄື: ວັດແກ້ວຟ້າ ໃນເຂດເທສະບານ ຈຸດຫນຶ່ງ, ບ້ານກໍແມນ ຫ່າງຈາກເທສະບານປະມານ 16 ກິໂລແມັດ ຈຸດຫນຶ່ງ ແລະບ້ານຫາດສາລົງມາທາງນ້ຳອູ ຈຸດຫນຶ່ງ, ວັດແກ້ວຟ້າເຂດເທສະບານ ເປັນວັດເກົ່າແກ່ມີພະສົງ 4 ອົງສາມະເນນ (ພະນ້ອຍ) 10 ອົງ ແຕ່ຂາດການສ້າງສາມີພຽງແຕ່ອາຮາມ ແລະກຸດຕິເກົ່າໆ ຢູ່ຈຸດນີ້ ປະຊາຊົນໄດ້ລວມກັນ 5 ຫມູ່ບ້ານ ທຳການອະນາໄມໃນຄາບດຽວ ຂອງວັນທີ 25/2/1998 ແລະ ສຳເລັດການຂົ້ນ



ທະບຽນ ແລະ ປົກປັກຮັກເອກະສານໄດ້ 261 ຜູກ, ພັບສາ 12 ເຫລັ້ມ. ມີເອກະສານສຳຄັນ ຄື: ຕຳນານຂຸນບູຣົມ(ລາວບູຮານ) 1 ຜູກ 100 ໃບ ເປັນເອກະສານສຳຄັນ. ຈາກນັ້ນ ກໍໄດ້ເຄື່ອນໄປສູ່ເຂດກໍແມນ ເຊິ່ງແມ່ນບ້ານເກົ່າແກ່ ຄາດວ່າຈະມີເອກະສານຫລາຍ ຜ່ານເສັ້ນທາງທີ່ລຳບາກສົມຄວນ ແຕ່ເມື່ອໄປເຖິງກໍຈຶ່ງຮູ້ວ່າ ວັດນີ້ໄດ້ຖືກໄຟໄຫມ້ເມື່ອບໍ່ດົນມານີ້ ເຮັດໃຫ້ເອກະສານເຫລືອພຽງແຕ່ລຳພະເຫວດ 18 ຜູກ ນອກນັ້ນ ໄຟໄຫມ້ໃຊ້ບໍ່ໄດ້ 180 ຜູກ ແລະ ພັບສາ 55 ເຫລັ້ມ ຈາກນັ້ນ ພວກເຮົາກໍໄດ້





ເມືອງຜົ້ງສາລີ ມີເອກະສານ 617 ຜູກ, ພັບສາ 214 ເຫລັ້ມ ມີເອກະສານທີ່ເກົ່າ 222 ປີ, ຫນັງສືທີ່ສຳຫລວດໄດ້ລື່ນຄາດຫມາຍ ທີ່ທາງແຂວງໄດ້ສົ່ງຕົວເລກໄປຫາໂຄງການກ່ອນຈະຂຶ້ນມາສຳຫລວດ.

ຫນ່ວຍງານໄດ້ກອຍລົງມາທາງເຂດໃຕ້ ກໍຄືໃນເມືອງບຸນໃຕ້ ເຊິ່ງບໍ່ມີຕົວເລກລາຍງານ ແຕ່ກໍຄາດວ່າ ບໍ່ຕ່າງຈາກສອງເມືອງທີ່ຜ່ານມາ ພວກເຮົາໄດ້ເຂົ້າພົບເຈົ້າເມືອງເມືອງບຸນໃຕ້ ສົມທົບກັບ ສະຫາຍແສງຄຳ ພະນັກງານຫ້ອງການເມືອງ ເປັນຜູ້ຕິດຕາມຫນ່ວຍສຳຫລວດ ເລີ່ມເຄື່ອນໄຫວຈາກບ້ານນາຫວາຍ ເຊິ່ງແມ່ນຊົນເຜົ່າລື້ ບໍ່ຕ່ຳກວ່າ 180 ຄອບຄົວ ເຫັນວ່າສະພາບວັດວາສາສະຫນາ ຍັງຮຸ່ງເຮືອງດີ ມີກຸດຕິຫລັງໃຫຍ່ ອາຮາມຈົບງາມ ກໍເປັນບ້ານຕົວຢ່າງທາງດ້ານວັດທະນະທຳ ພວກເຮົາຈຶ່ງໄດ້ສຳຫລວດ ແລະ ຂຶ້ນບັນຊີເອກະສານທັງຫມົດມີ 354 ຜູກ,ພັບສາ 61 ເຫລັ້ມ. ມີເອກະສານສຳຄັນ ຊື່ ທະສະນິບາດ 7 ຜູກ ອາຍຸປະມານ 180 ປີ ພວກເຮົາກໍໄດ້ກີເອົາຈຸດເທສະບານເມືອງບຸນໃຕ້ ເປັນບ່ອນເຕົ້າໂຮມ ມີຈຳນວນຜູ້ເຂົ້າຮ່ວມເຮັດອະນາໄມຫລາຍເປັນພິເສດ ເຖິງ 154 ຄົນ ໃນນັ້ນ ມີຜູ້ຍິງເຖິງ 68 ແຮງງານ ມີຫນັງສືໃບລານ 354 ຜູກ, ພັບສາ 21 ເຫລັ້ມ ສຳຫລວດວັນທີ 9 ເຖິງ 10/3/98 ກໍສຳເລັດ ຈາກນັ້ນ ກໍເຄື່ອນໄປສູ່ວັດບ້ານບຸນຍອງເປັນຈຸດສຸດທ້າຍ ເປັນວັດທີ່ເກົ່າ ແຕ່ຂາດພະສົງ ມີພຽງສາມະເນນ (ນ້ອຍ) 3 ອົງ ມີເອກະສານຈຳນວນ 123 ຜູກ, ພັບສາ 72 ເຫຼັ້ມ ໃຊ້ເວລາພຽງສອງມື້ກໍສຳເລັດ. ເມື່ອແລ້ວຈາກເຂດເຫນືອຂອງແຂວງ ພວກເຮົາກໍໄດ້ກອຍລົງມາຮອດເຂດໃຕ້ ຄືເຂດເມືອງຂວາ ເລີ່ມຈາກວັດສົບກ່າຍ 2 ວັນ, ວັດບ້ານສົບໄຊ 3 ວັນ ແລະ ວັດສີຄູນເມືອງງຂວາ 3 ວັນ

ລົງເຄື່ອນໄຫວຈຸດທີ 3 ຄືວັດບ້ານຫາດສາ ເປັນບ້ານຂອງຊົນເຜົ່າລາວລຸ່ມ ມີປະຫວັດອັນຍາວນານ ມີນັກປາດອາຈານ ເຖົ້າແກ່ ຜູ້ຊົງຄຸນວຸດທິຫລາຍ ແລະ ສຳຫລວດໄດ້ 308 ຜູກ, ພັບສາ 35 ເຫລັ້ມ, ໃນຈຸດນີ້ ພວກເຮົາຍັງມີວັດບ້ານວັງໄຊ ເຊິ່ງບໍ່ໄກຈາກຫາດສາເທົ່າໃດ ຈຶ່ງໄດ້ແຈ້ງໃຫ້ເຖົ້າແກ່ ເອົາເອກະສານມາໂຮມເຮັດບ່ອນດຽວ, ບ້ານວັງໄຊ ມີຫນັງສື 30 ຜູກ, ພັບສາ 112 ເຫລັ້ມ ໃນສອງວັດນີ້ ມີເອກະສານເກົ່າແກ່ ແລະຄວນ ແກ່ການຄົ້ນຄວ້າສອງເລື່ອງຄື ປາຣະມີຍອດແກ້ວ 1 ຜູກ ແລະ ພົມມະທັດກອດຈິດ 1 ຜູກ, ລວມແລ້ວ ສະເພາະ



ລວມແລ້ວ ໃນ 3 ຈຸດນີ້ ມີເອກະສານລວມ 9 ວັດ ໃບລານ 680 ຜູກ ແຕ່ບໍ່ມີພັບສາ ເອກະສານສຳຄັນມີເກືອບ 12 ເລື່ອງ ເຊິ່ງມີທັງເກົ່າແກ່ ແລະ ຂຽນງາມ ເຊັ່ນ ປະກິນ ສົມໂພດ, ເນມີຣາດ, ມະຫາວົງ, ແຕງອ່ອນ ລວມ 56 ຜູກ, 1.101 ໃບລານ ໄດ້ຫມາຍປີ້ແດງໄວ້ແລ້ວ.

ໄລຍະເວລາຂອງການສຳຫລວດໃກ້ຈະຫມົດກຳນົດ ພວກເຮົາຈຶ່ງຕັດສິນໃຈໄປເມືອງສຳພັນ ແລະເປັນເມືອງສຸດທ້າຍ ໄດ້ຮັບຂ່າວວ່າເປັນບ່ອນສຳຄັນ ຊື່ບ້ານເມືອງຮຸນ (ເກົ່າ) ສົມດັ່ງຄວາມຕັ້ງໃຈ ປະຫວັດຂອງຊື່ບ້ານ ແມ່ນສ້າງຕັ້ງຕາມຊື່ເດີມຂອງເມືອງຮຸນຊຽງຮຸ່ງ ຊາວບ້ານມີປະມານ 70 ກວ່າຄອບຄົວ ຢູ່ວັດ ມີພະສົງ 6 ອົງ ຕັ້ງຢູ່ຕາມແຄມຝັ່ງແມ່ນ້ຳອູ ຕ້ອງໄດ້ເດີນທາງໂດຍທາງເຮືອ ໃຊ້ເວລາ 5 ຊົ່ວໂມງ ຈາກເມືອງຂວາໄປ.

ຈາກການສຳຫລວດຢູ່ວັດນີ້ ໄດ້ພົບເກີນຄາດ ເພາະວັດດຽວມີເອກະສານເກືອບ 682 ຜູກ ແຕ່ບໍ່ມີພັບສາ ເອກະສານສ່ວນຫລາຍເປັນແບບລາວ ປະຊາຊົນກໍເປັນເຜົ່າລາວ, ດຳລົງຊີວິດແບບທຳມະຊາດ ການສ້າງນ້ຳທຳບຸນ ວັດວາສາສະຫນາ ຍັງມີການເທສະຫນາ ແຕ່ການໄປມາລຳບາກເລັກນ້ອຍ ມີແຕ່ທາງເຮືອ ແລະ ຜາແກ້ງທີ່ສູງຊັນ ເຮັດໃຫ້ນັກສຳຫລວດຕ້ອງທັນໃຈເຂົ້າອອກ





ແບບບໍ່ທົ່ວທ້ອງປານໃດ ໂດຍສະເພາະ ເວລານ້ຳນ້ອຍໃນລະດູແລ້ງ ການຂຶ້ນລົງຍິ່ງລຳບາກ ແຕ່ຫາກເພື່ອຊາດເພື່ອວັດທະນະທຳ ພວກເຮົາພະຍາຍາມໄປໃຫ້ຮອດ ຂຸດຄົ້ນໃຫ້ເຫັນ ແລະ ໄດ້ສຳຜັດໂອ້ລົມກັບພໍ່ແມ່ປະຊາຊົນ ຈົນເປັນທີ່ເຂົ້າໃຈ.

ທຸກວັດທຸກບ້ານທີ່ມີເອກະສານໃບລານ ນອກຈາກການສຳຫລວດ ແລະ ປົກປັກຮັກສາແລ້ວ ຍັງໄດ້ຈັດໃຫ້ມີພິທີສົມມາຄາຣະວະ ແລະ ບາງແຫ່ງທີ່ມີເງື່ອນໄຂ ກໍໄດ້ທຳພິທີແຫ່ ແລະ ສົມໂພດທຳ ພ້ອມຖ່າຍວິດີໂອໄວ້ເປັນສາລະຄະດີໄປນຳ.

ຈາກການເຄື່ອນໄຫວປົກປັກຮັກສາຫນັງສືໃບລານ, ພັບສາ ຄັ້ງປະຫວັດສາດນີ້ ເຮັດໃຫ້ພໍ່ແມ່ເຖົ້າແກ່ ໄດ້ຮູ້ເຫັນ ແລະ ເຕັມໃຈຮັບເອົາມູນມໍລະດົກທີ່ເປັນຂອງທ້ອງຖິ່ນຕົນ ດ້ວຍຄວາມພໍໃຈ ຈຶ່ງຂໍໃຫ້ທຸກໆທ່ານ ແລະ ທຸກໆບ້ານ ທີ່ຫນ່ວຍງານເຮົາໄດ້ລົງໄປຮອດ ຈົ່ງຮັກສາຮີດຄອງປະເພນີ ກໍຄືຮັກສາຄຳພີຜູກໃບລານ ໄວ້ໃຫ້ລູກຫລານ ໄດ້ສືບທອດຮ່ຳຮຽນຕໍ່ໆໄປ.



# " ໄມໂຄຼຟິມ ... ບົດບາດໃນການ ອະນຸລັກໜັງສືໃບລານ "

ການຖ່າຍໄມໂຄຼຟິມ ນັບວ່າເປັນວິທະຍາການສະໄໝໃໝ່ ທີ່ມີຄຸນຄ່າສູງ ກ່ຽວກັບການອະນຸລັກໜັງສືໃບລານ ຍ້ອນວ່າການຖ່າຍໄມໂຄຼຟິມ ກໍ່ຄືການຖ່າຍຮູບເອົາໄວ້ ຄືກັບວ່າເຮົາໄດ້ສ້າງຕົ້ນສະບັບມາອີກສະບັບໜຶ່ງ.

ການຖ່າຍໄມໂຄຼຟິມ ມີຄວາມສຳຄັນຫລາຍ ໃນການບັນທຶກຂໍ້ມູນ ຈາກຕົ້ນສະບັບຈິງ, ສະດວກສະບາຍໃນການຄົ້ນຄວ້າ ເພາະຕົ້ນສະບັບຈະບໍ່ຢູ່ກະຈັດກະຈາຍຄືແຕ່ກ່ອນ ເຮົາຈະມີສຳເນົາເປັນໄມໂຄຼຟິມອອກມາ ແລະ ເຮົາຈະສາມາດສຶກສາຂໍ້ມູນຕ່າງໆຈາກໄມໂຄຼຟິມ ໂດຍທີ່ບໍ່ຕ້ອງເດີນທາງໄປໄກ ຫລືໃນກໍລະນີຕົ້ນສະບັບແທ້ ອາດຈະເກີດໄຟໄໝ້ ຫລືເສຍຫາຍໄປ ເຮົາກໍ່ສາມາດເກັບກຳຂໍ້ມູນໄດ້ ເນື່ອງຈາກເຮົາຖ່າຍໄມໂຄຼຟິມເອົາໄວ້ແລ້ວ.

ໄປພ້ອມກັບການປົກປັກຮັກສາໜັງສືໃບລານດ້ວຍວິທີວິທະຍາ ທາງໂຄງການໄດ້ມີການຈຳແນກ ເລືອກເຟັ້ນເອກະສານທີ່ມີຄວາມສຳຄັນຈຳນວນໜຶ່ງ ຖ່າຍເຂົ້າໄມໂຄຼຟິມ ເປັນຕົ້ນວ່າ ເອກະສານທີ່ມີອາຍຸເກົ່າແກ່, ອາຍຸກ່ອນຄິດຕະສັດຕະວັດທີ 19 ຂຶ້ນເມືອ, ໜັງສືທີ່ຫາຍາກ ມີໜ້ອຍສະບັບ, ເອກະສານທີ່ມີຄຸນຄ່າທາງວັນນະກຳ ໂດຍສະເພາະແມ່ນປະເພດທີ່ບັນຈຸເນື້ອໃນກ່ຽວກັບພູມປັນຍາຂອງຄົນບູຮານ, ປະຫວັດສາດ, ໂຫຣາສາດ, ຕຳລາຢາ, ຫລັກໄວຍາກອນ ປະມວນຄຳສັບ ໆລໆ ທັງໝົດນີ້ ຈັດເຂົ້າໃນປະເພດໜັງສືທີ່ມີຄວາມສຳຄັນ ຄວນຖ່າຍໄມໂຄຼຟິມເອົາໄວ້ ເພື່ອຮັບປະກັນຍາວນານ ແລະ ຫລີກເວັ້ນການສູນເສຍ.

ເນື່ອງຈາກວ່າ ພິພິທະພັນຫລວງພະບາງ ເປັນບ່ອນສະສົມໜັງສືໃບລານທີ່ເກົ່າແກ່ ແລະມີຄຸນຄ່າ ເຊິ່ງກົມພິພິທະພັນ ແລະວັດຖຸບູຮານ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ໄດ້ທ້ອນໂຮມມາຈາກ ວັດທີ່ເປ່ເພໃນທົ່ວແຂວງຫລວງພະບາງ ໃນລະຫວ່າງ ປີ 1977-79 ພິພິທະພັນຫລວງພະບາງໃນປັດຈຸບັນ ຈຶ່ງຖືໄດ້ວ່າ ເປັນຄັງສາງໃບລານທີ່ສຳຄັນແຫ່ງໜຶ່ງໃນຫລວງພະບາງ ມີເອກະສານທັງໝົດ 6.809 ຜູກ ເຊິ່ງໄດ້ຮວບຮວມຂໍ້ມູນທີ່ສຳຄັນທາງວັດທະນະທຳຂອງຊາດເອົາໄວ້ເຖິງ 18 ສາດ.

ໃນທ້າຍປີ 1996 ຄະນະໂຄງການປົກປັກຮັກສາໜັງສືໃບລານ ໄດ້ຕົກລົງໃຫ້ໜ່ວຍຖ່າຍໄມໂຄຼຟິມ ຕັ້ງຈຸດຖ່າຍທຳຢູ່ພິພິທະພັນຫລວງພະບາງ ດົນເຖິງ 15 ເດືອນ ເພື່ອຖ່າຍທຳເອກະສານທີ່ສຳຄັນ ແລະ ເກົ່າແກ່ຕ່າງໆ ກວ່າ 90 ສ່ວນຮ້ອຍ ຂອງໜັງສືທັງໝົດໃນພິພິທະພັນຫລວງພະບາງ.

ການຖ່າຍທຳໄດ້ດຳເນີນມາແຕ່ເດືອນທັນວາ 1996 ມາເຖິງຕົ້ນເດືອນກຸມພາ 1998 ໜ່ວຍຖ່າຍໄມໂຄຼຟິມ ກໍ່ສຳເລັດ ນັບວ່າເປັນຈຸດທີ່ໃຊ້ເວລາຍາວນານກວ່າບ່ອນອື່ນໆ ສາມາດຖ່າຍເອກະສານທີ່ສຳຄັນໄດ້ 6.565 ຜູກ ຮວມມີ 110 ມ້ວນ.





ການຖ່າຍທຳໃນຄັ້ງນີ້ ໄດ້ຮັບການຮ່ວມມືເປັນຢ່າງດີ ຈາກຄະນະຮັບຜິດຊອບຫໍພິພິທະພັນຫລວງພະບາງ ແລະ ພະແນກ ຖະແຫລງຂ່າວ-ວັດທະນະທຳຂອງແຂວງ. ໂດຍສະເພາະດ້ານສະຖານທີ່ຖ່າຍທຳແມ່ນເຮັດຢູ່ກັບທີ່ ນັບວ່າເປັນການຮ່ວມມືທີ່ມີຄວາມໝາຍສຳຄັນ ໃນການຕໍ່ອາຍຸ ແລະ ສ້າງຕົ້ນສະບັບໃບລານທີ່ມີປະໂຫຍດແກ່ການອະນຸລັກ ແລະ ເຜີຍແຜ່ຄັງສາງທາງພູມປັນຍາຂອງຊາວຫລວງພະບາງ.

ນັບແຕ່ ໂຄງການປົກປັກຮັກສາໜັງສືໃບລານລາວ ໄດ້ຮັບທຶນຊ່ວຍເຫລືອຈາກລັດຖະບານ ສ.ສ. ເຢຍຣະມັນ ການຖ່າຍໄມໂຄຼຟິມ ໄດ້ດຳເນີນຢ່າງຕໍ່ເນື່ອງມາຮອດປັດຈຸບັນຖ່າຍທຳຢູ່ກຳແພງນະຄອນວຽງຈັນ

ເຂດເມືອງຈັນທະບູລີ, ສີສັດຕະນາກ, ໄຊເຊດຖາ, ສີໂຄດຕະບອງ, ຫາດຊາຍຟອງ, ນາຊາຍທອງ, ຫໍສະຫມຸດແຫ່ງຊາດ ແລະ ພິພິທະພັນຫລວງພະບາງ ໄດ້ແລ້ວ 15.805 ຜູກ, ຮວມ 3.060 ເລື່ອງ ໃຊ້ຟິມ 260 ມ້ວນ.

ເຕັກນິກການຖ່າຍທຳ ເປັນວຽກງານທີ່ລະອຽດຫລາຍ ຜູ້ຖ່າຍຕ້ອງມີຄວາມຮັບຜິດຊອບສູງ ແລະ ສິ້ນເປືອງເວລາ. ວຽກງານນີ້ຕ້ອງດຳເນີນໄປເປັນ 6 ຂັ້ນຕອນຄື :

**1. ການເລືອກເຟັ້ນເອກະສານ**

**2. ການກະກຽມກ່ອນຖ່າຍ :**

ເອົາເອກະສານທີ່ເລືອກໄວ້ແລ້ວນັ້ນ ມາທຳຄວາມສະອາດເຊັດດ້ວຍເຫລົ້າ 90° ໃບບາງກໍລະນີ ຈຳເປັນຕ້ອງທາໃບລານຄືນໃຫມ່ດ້ວຍນ້ຳຂີ້ເລ້ ຈາກລົດຈັກ ແລ້ວເຊັດໃຫ້ກ້ຽງ ເພື່ອໃຫ້ຕົວຫນັງສືເດັ່ນຂຶ້ນເວລາຖ່າຍຈະໄດ້ຊັດເຈນ.

**3. ການຖ່າຍໄມໂຄຟິມ :**

ເອົາໃບລານມາວາງຮຽງກັນຕາມລຳດັບຫນ້າ ແຕ່ລະຫນ້າຕ້ອງຂຽນຫມາຍເລກກຳກັບໄວ້ ຖ່າຍບາດ (ໄປ) ລະ 6-8 ຫນ້າ ແລ້ວແຕ່ຂະຫນາດຂອງໃບລານ. ໃນຕອນນີ້ ຕ້ອງເອົາໃຈໃສ່ເປັນພິເສດ ຕໍ່ລຳດັບຫນ້າຂອງເລື່ອງ ບໍ່ໃຫ້ສັບປົນກັນ.

**4. ຕິດປ້າຍໄມໂຄຟິມ :**

ໄມໂຄຟິມມ້ວນຫນຶ່ງ ອາດຖ່າຍໄດ້ຫລາຍໆເລື່ອງ ສະນັ້ນແຕ່ລະກັບ/ມ້ວນ ຂອງໄມໂຄຟິມ ຕ້ອງຕິດປ້າຍທັນທີ ເພື່ອຫມາຍບອກຊື່ເລື່ອງ ເນື້ອໃນທີ່ຖ່າຍໄວ້ໃນມ້ວນນັ້ນໆ ແລ້ວຕິດຫມາຍເລກລຳດັບຂອງມ້ວນອີກ.



**5. ການລ້າງຟິມ :**

ທັນທີທີ່ຖ່າຍແລ້ວ, ຕ້ອງນຳສົ່ງມ້ວນຟິມໄປລ້າງຢູ່ຫ້ອງລ້າງຟິມຂອງໂຄງການທີ່ວຽງຈັນ ຈາກນັ້ນ ເພື່ອກວດກາວ່າຖືກຕ້ອງ ແລະຮັບປະກັນຄຸນນະພາບການຖ່າຍດີແລ້ວບໍ່ກໍ່ຈະສົ່ງມ້ວນຟິມທີ່ລ້າງແລ້ວນັ້ນ ໄປເຂົ້າເຄື່ອງອ່ານ ຖ້າວ່າມີຫຍັງຜິດພາດຈະຖ່າຍໃຫມ່ໄດ້ທັນທີ ແລະ ບໍ່ສັບສົນ.



**6. ການພິມບັນຊີໄມໂຄຟິມ :**

ໃນເບື້ອງຕົ້ນ ອາດຈະພິມບັນຊີລາຍຊື່ເລື່ອງທີ່ໄດ້ຖ່າຍອອກມາ ໂດຍການເກັບກຳຂໍ້ມູນຈາກປ້າຍຕິດຟິມນັ້ນເອງ ແຕ່ວ່າເພື່ອຈະຈັດພິມບັນຊີຄົບຊຸດຖາວອນ ຈຳເປັນຕ້ອງກວດກາເນື້ອໃນໄມໂຄຟິມລະອຽດອີກຕື່ມ.

ເລີ່ມແຕ່ວັນທີ 18 ກຸມພານີ້ ຫນ່ວຍຖ່າຍໄມໂຄຟິມໄດ້ເຄື່ອນຍ້າຍສູ່ວັດໃຫມ່ສຸວັນນະພູມມາຣາມ ຄັງສາງທີ່ເກັບມ້ຽນຫນັງສືໃບລານຫລາຍກວ່າຫມູ່ໃນທົ່ວປະເທດ ຄາດວ່າຈະໃຊ້ເວລາປະມານນຶ່ງປີ ຈຶ່ງສຳເລັດ

ວຽກງານຖ່າຍໄມໂຄຟິມ ນັບໄດ້ວ່າເປັນວຽກງານທີ່ສຳຄັນໃນການອະນຸລັກ ແລະ ເຜີຍແຜ່ພູມປັນຍາ ຂອງບັນພະບຸລຸດໃຫ້ຍືນຍາວ ເປັນການປົກປັກຮັກສາເນື້ອໃນເອກະສານເຫລົ່ານີ້ໄວ້ໃຫ້ອະນຸຊົນຮຸ່ນຫລັງ ໄດ້ສຶກສາຮ່ຳຮຽນ.

# ສູ່ດິນແດນບໍ່ແກ້ວ

✍ ຄຳມຸກ

ໃນຂະນະທີ່ຫນ່ວຍສຳຫລວດຈຸທີ 1 ກຳລັງເຄື່ອນໄຫວຢູ່ແຂວງຫລວງນ້ຳທາ, ຫນ່ວຍສຳຫລວດຈຸທີ 2 ນຳໂດຍທ່ານອ່ອນຈັນສະຫມອນ ທີ່ສຳເລັດວຽກງານຢູ່ແຂວງຫລວງພະບາງ ກໍ່ເດີນທາງມຸ່ງຫນ້າສູ່ແຂວງບໍ່ແກ້ວ.





ໃນວັນທີ 7 ພະຈິກ 1997 ພິທີປິດປັ້ນສຳຫລວດຄັ້ງປະຖົມມະລືກ ໃນ ່ນແດນບໍ່ແກ້ວ ໄດ້ໄຂຂຶ້ນ ທີ່ວັດຈອມເຂົາ ະນີລັດ ເທດສະບານເມືອງ ຫ້ວຍຊາຍ າຍມີ ທ່ານສີແພງ ວົງປັນຍາ ຫົວຫນ້າ ະແນກກະແຫລງຂ່າວ ແລະ ວັດທະນະທຳແຂວງ ເປັນປະທານ, ນອກນັ້ນຍັງມີພະອາຈານຄຳຫມັ້ນ ສີຣິແພງພັນ ປະທານ ພ.ສ.ລ. ແຂວງ, ທ່ານບົວສີ ບຸນຍາວົງ ຮອງຫົວຫນ້າພະແນກກະແຫຼງຂ່າວ ແລະວັດທະນະທຳແຂວງ, ອຳນາດການປົກຄອງ ພ້ອມທັງປະຊາຊົນ ເຂົ້າຮ່ວມຢ່າງ ຫລວງຫລາຍ.

**ວັດຈອມເຂົາມະນີລັດ** ຕັ້ງສະຫງ່າຢູ່ເທິງຈອມພູສູງ ໃນໃຈກາງເທສະບານເມືອງຫ້ວຍຊາຍ ສ້າງຂຶ້ນໃນປີ 1819 ເປັນວັດທີ່ປະຊາຊົນເມືອງຫ້ວຍຊາຍ ເຄົາລົບນັບຖືເປັນຢ່າງຍິ່ງ.

ຫນ່ວຍສຳຫລວດ ໄດ້ໃຊ້ເວລາ 4 ວັນ ໃນການສຳຫລວດ ແລະ ຈັດຫມວດຫມູ່ ພົບເຫັນເອກະສານໃບລານ 259 ຜູກ ຮວມມີ 83 ເລື່ອງ ໃນນີ້ ມີເອກະສານທີ່ສຳຄັນ 2 ເລື່ອງຄື: **"ສິງຄາລະສູດ"** ແລະ **"ຊ່າງສາມງາປາສານງ່ຽງ"**

ໃນລະຫວ່າງ ທີ່ຫນ່ວຍສຳຫລວດ ເຄື່ອນໄຫວຢູ່ວັດສະຫລີດອນແກ້ວ ໃນວັນທີ 17 ພະຈິກ 97 ສາສະດາຈານ ດຣ. ຮາຣັນ ຣຸນດິອຸສ ກໍ່ໄດ້ເດີນທາງ ຈາກເມືອງນາແລ ແຂວງຫລວງນ້ຳທາ ມາຢ້ຽມຢາມຫນ່ວຍສຳຫລວດ ຈົນເຖິງວັນທີ 22 ພະຈິກ ທ່ານຈຶ່ງເດີນທາງກັບ.

ນອກຈາກການພົບປະກັບຫນ່ວຍສຳຫລວດ ສາສະດາຈານ ດຣ. ຮາຣັນ ຣຸນດິອຸສ ໄດ້ກືໂອກາດ ຢ້ຽມຢາມສະພາບການເກັບມ້ຽນຫນັງສືໃບລານຢູ່ວັດຕ່າງໆ ໂອ້ລົມ ແລກປ່ຽນກັບພະສົງ ອຳນາດການປົກຄອງ ແລະ ເຖົ້າແກ່ແນວໂຮມນຳອີກ.

ຫນ່ວຍສຳຫລວດ ໄດ້ໃຊ້ເວລາເຄື່ອນໄຫວຢູ່ເທສະບານເມືອງຫ້ວຍຊາຍ ເປັນເວລາເກືອບ 1 ເດືອນ ສາມາດສຳຫລວດໄດ້ 11 ວັດ ຮວມມີຫນັງສືໃບລານ 1970 ຜູກ.

ເນື່ອງຈາກວ່າຈະມີການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ 4 ຫນ່ວຍສຳຫລວດແຕ່ລະທ່ານ ຈຶ່ງຕ້ອງກັບຄືນສູ່ທ້ອງຖິ່ນ ເພື່ອປະຕິບັດຫນ້າທີ່ເປັນພົນລະເມືອງທີ່ດີ ປ່ອນບັດເລືອກເອົາຜູ້ທີ່ດີ ມີຄຸນສົມບັດເຂົ້າສະພາ ປະກອບກັບການກະກຽມການເລືອກຕັ້ງຢູ່ເທສະບານເມືອງຫ້ວຍຊາຍ ກໍ່ຄືທົ່ວປະເທດພວມຟົດຟື້ນ ຫນ່ວຍສຳຫລວດ ຈຶ່ງໂຈະການສຳຫລວດຢູ່ເມືອງອື່ນໆໄວ້ ແລະຈະມີການສືບຕໍ່ອີກ ໃນປີ 1998.

ການປົກປັກຮັກສາຫນັງສືໃບລານຢູ່ແຂວງບໍ່ແກ້ວ ເຖິງວ່າຈະເປັນຄັ້ງທຳອິດກໍ່ຕາມ ແຕ່ວຽກງານນີ້ ເຮັດໃຫ້ພະສົງ ອຳນາດການປົກຄອງ, ປະຊາຊົນ ແລະ ພາກສ່ວນກ່ຽວຂ້ອງ ໄດ້ມີໂອກາດຮ່ວມມືຮ່ວມໃຈກັນ ສ້າງບຸນກຸສົນ ອະນຸລັກຮັກສາຫນັງສືໃບລານທີ່ເກົ່າແກ່ເຖິງມີນ້ອຍ ແຕ່ກໍ່ຍິ່ງໃຫຍ່ໄປດ້ວຍຄຸນຄ່າ.

# ມຸງຄຸນຊີວິດ

* ກ່າຍອອກຈາກ ພັບສາບ້ານນ້ຳທຸງ ເມືອງ ແລະ ແຂວງຫລວງນ້ຳທາ

ພ. ທິງສັກສິດ

- ຢ່ານອນຕື່ນສວາຍ ຢ່າຄອຍໄມ້ໃດກ
- ຢ່າອາຍທຳກິນ ຢ່າດູໝິ່ນເງິນນ້ອຍ
- ຢ່າຄອຍວາສະໜາ ຢ່າພົບພາຄົນຊົ່ວ
- ຢ່າສຸກກ່ອນທ່ານ ຢ່າພ່ານກອນທັມ
- ຢ່າລຳກອນເພັງ ຢ່າຂົ່ມເຫງຜູ້ນ້ອຍ
- ຢ່າເປັນຜູ້ຄອຍປະຈົບ ຢ່າພົບຫາແຕ່ເສດກິ
- ຢ່າດີແຕ່ຕົວ ຢ່າຊົ່ວແຕ່ຄົນອື່ນ
- ຢ່າຊື່ນຊົມຄວາມຜິດ ຢ່າຄິດເອົາແຕ່ໄດ້
- ຢ່າໃສ່ຮ້າຍຄົນດີ ຢ່າກ່າວວາຈີມຸສາວາດ
- ຢ່າປະມາດແກ້ວເຈົ້າສາມປະການ ຢ່າລືມບຸນຄຸນຄູບາອາຈານ ແລະ ພໍ່ແມ່
- ໃຫ້ເຄົາລົບນັບຖືເກົ້າແກ່ຕາຍາຍ ໃຫ້ລະອາຍຢ່າແຢງຜູ້ຍິງ ແລະ ເດັກນ້ອຍ

ໄດ້ດັ່ງນີ້ຈິ່ງໄດ້ຊື່ວ່າປັນຍາຊົນ ຄົນຜູ້ສະຫລາດ ທ່ານເອີຍ

# ຫວນຄືນ ຜົນສຳເລັດໃນຫນຶ່ງປີ



**ພາຍ** ຫລັງທີ່ໄດ້ເຄື່ອນໄຫວໃນສົກປີ 1996-1997 ຢ່າງມີຫມາກຜົນ ເພື່ອເປັນການສະຫລຸບ ແລະ ຕີລາຄາຄືນວຽກງານໃນແຕ່ລະດ້ານ ໃນວັນທີ 4 ກຸມພາ 1998 ໂຄງການໄດ້ຈັດກອງປະຊຸມສະຫລຸບວຽກງານ ສົກປີ 1996-97 ພາຍໃຕ້ການເປັນປະທານຂອງ ທ່ານ ບົວບານ ວໍລະຂຸນ ຮອງລັດຖະມົນຕີກະຊວງຖະແຫລງຂ່າວແລະວັດທະນະທຳ.

ເຂົ້າຮ່ວມໃນກອງປະຊຸມ ມີ ພະອາຈານເວດ ມາເສໄນ ຄະນະ ພ.ສ.ລ. ກຳແພງນະຄອນ, ທ່ານສາສະດາຈານ ດຣ. ຮະຣັນ ຣຸນດີອຸສ ຊຽວຊານ ສ.ສ. ເຢຍຣະມັນ ທີ່ປຶກສາກິຕິມະສັກປະຈຳໂຄງການ, ທ່ານຄຳເສັງ ສຸນດາລາ ຫົວຫນ້າກົມພິມຈຳຫນ່າຍ ຫໍສະຫມຸດແລະປ້າຍ ທີ່ປຶກສາດ້ານບໍລິຫານ, ນາງກົງເດືອນ ເນດຕະວົງ ອຳນວຍການຫໍສະຫມຸດແຫ່ງຊາດ ຫົວຫນ້າໂຄງການ ບັນດາທີ່ປຶກສາດ້ານວິຊາການ ແລະ ຜູ້ຕາງຫນ້າຈາກ ພາກສ່ວນຕ່າງໆ ເຂົ້າຮ່ວມ.

ໃນພິທີ ນາງກົງເດືອນ ເນດຕະວົງ ຫົວຫນ້າໂຄງການ ໄດ້ຍົກໃຫ້ເຫັນການເຄື່ອນໄຫວ ແລະ ຜົນງານທີ່ພົ້ນເດັ່ນຫລາຍດ້ານ ເຊິ່ງຕະຫລອດ 1 ປີ ໂຄງການໄດ້ສຳຫລວດຢູ່ແຂວງຫລວງພະບາງ, ອຸດົມໄຊ, ຫລວງນ້ຳທາ ແລະ ບໍ່ແກ້ວ ຮວມວັດທີ່ສຳຫລວດໄດ້ 55 ວັດ ມີຫນັງສື 25.218 ຜູກ ໃນນັ້ນ ມີພັບສາ 223 ເຫລັ້ມ.

ຄຽງຄູ່ກັນນັ້ນ ຫນ່ວຍຖ່າຍໄມໂຄຟີມ ທີ່ຕັ້ງຈຸດຢູ່ຫໍພິພິທະພັນຫລວງພະບາງ ໄດ້ຖ່າຍເອົາ ຫນັງສືສຳຄັນທັງຫມົດ 6.565 ຜູກ, ໂດຍໃຊ້ເວລາມາເປັນປີກວ່າ. ໃນປີນີ້ ໂຄງການມອບທຶນຊຸກຍູ້ການສຶກສາສົງໃຫ້ແກ່ ແຂວງຫລວງນ້ຳທາ ແລະ ບໍ່ແກ້ວ ຈຳນວນ 9.210.000 ກີບ, ຈັດພິມປຶ້ມຮີດຄອງປະເພນີບູຮານ ແລະ ປະຫວັດເມືອງຊຽງແຂງ ຈຳນວນພິມທັງຫມົດ 4.000 ຫົວ ເພື່ອແຈກຢາຍໃນທົ່ວສັງຄົມ. ສະເພາະກອງປະຊຸມສຳມະນາວິຊາການນັ້ນ ໄດ້ຈັດຂຶ້ນໃນ 2 ແຂວງພາກເຫນືອ ຄື : ຜົ້ງສາລີ ແລະ ບໍ່ແກ້ວ.

ຜົນໄດ້ຮັບຈາກການເຄື່ອນໄຫວຕະຫລອດ 1 ປີນີ້ ເຮັດໃຫ້ພະສົງ ແລະ ຊາວບ້ານ ເຂົ້າໃຈຢ່າງເລິກເຊິ່ງ ຕໍ່ນະໂຍບາຍຂອງພັກ ແລະ ລັດຖະບານ ໃນການຟື້ນຟູວັດທະນະທຳຂອງຊາດ ໂດຍພະສົງ ຊາວບ້ານ ແລະ ອຳນາດການປົກຄອງທຸກຂັ້ນ ໄດ້ໃຫ້ການຮ່ວມມື ແລະ ປະກອບສ່ວນໃນການອະນຸລັກຮັກສາຫນັງສືໃບລານທຸກຂັ້ນຕອນ.

ທາງດ້ານວິຊາການ ເຫັນວ່າ ການເກັບມ້ຽນ ແລະ ຈັດຫມວດຫມູ່ເປັນລະບົບ ຈະສະດວກໃນການສຶກສາຄົ້ນຄວ້າ, ການອະນາໄມເຊັດເຫລົ້າເກົ້າສິບ ຍັງເປັນການຍືດອາຍຸຂອງຫນັງສືໃບລານຕື່ມອີກອາດເຖິງຮ້ອຍປີ.



ໃນພິທີ ທ່ານ ສາສະດາຈານ ດຣ. ຣະຣັບ ຣຸນດິອຸສ ຊ່ຽວຊານປະຈຳ ໂຄງການ ໄດ້ມີຄຳເຫັນວ່າ: "ໂຄງການນີ້ ໂດຍໄດ້ຮັບການຊ່ວຍເຫລືອຈາກກະຊວງ ການຕ່າງປະເທດ ຂອງ ສ.ສ. ເຢຍຣະມັນ ໃນໄລຍະຍາວ ແລະ ຄາດວ່າ ຈະໄດ້ຮັບ ການຊ່ວຍເຫລືອຕໍ່ໄປ ເພາະລັດຖະບານ ເຢຍຣະມັນ ຖືວ່າເປັນທີ່ເພິ່ງພໍໃຈ ທີ່ ໂຄງການນີ້ ໄດ້ຮັບການເອົາໃຈໃສ່ຈາກ ທຸກພາກສ່ວນ ນັບແຕ່ຂັ້ນນຳຂອງກະຊວງ ແຂວງ, ອຳນາດການປົກຄອງ, ແນວໂຮມ ພະສົງ ຕະຫລອດຮອດຊາວບ້ານ ແລະ ຫວ່າງມໍ່ໆມານີ້ ກໍ່ໄດ້ຂ່າວວ່າ ໂຄງການ ໃບລານ ຈະໄດ້ຖືກເຊື້ອເຊີນເຂົ້າໃນການ ເຄື່ອນໄຫວຂອງໂຄງການ "ຄວາມຊົງຈຳ ຂອງໂລກ ຂອງອົງການອຸຍແນສໂກ" ນີ້ກໍ່ນັບວ່າ ເປັນຜົນສຳເລັດອີກບາດກ້າວ ໜຶ່ງ ຂອງໂຄງການປົກປັກຮັກສາ ໜັງສືໃບລານລາວ.

ຕອນທ້າຍຂອງພິທີ ທ່ານ ບົວບານ ວໍລະຂຸນ ຮອງລັດຖະມົນຕີ ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ. ຜູ້ຊີ້ນຳວຽກໂຄງການ ໄດ້ກ່າວຕອບນຶ່ງ ວ່າ: "ມາຮອດສົກປີ 1996-97 ນີ້ ວຽກງານຂອງໂຄງການກໍເປັນປີທີ 5 ທີ່ໄດ້ຮັບການອຸປະຖຳເປັນຢ່າງດີ ຈາກ ລັດຖະບານ ສ.ສ. ເຢຍຣະມັນ ເຊິ່ງຊຸກຍູ້ ໃຫ້ວຽກງານເຄື່ອນໄຫວເປັນໄປດ້ວຍດີ ເປັນປີທີ່ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ໄດ້ມອບຄວາມຮັບຜິດຊອບ ວຽກນີ້ ໃຫ້ແກ່ຫໍສະໝຸດແຫ່ງຊາດ ເປັນຜູ້ປະສານສົມທົບ ກັບທຸກພາກສ່ວນ ທັງຝ່າຍຄະລືທັດແລະຝ່າຍສົງ ເຄື່ອນໄຫວ ເພື່ອປະຕິບັດໂຄງການໃນຫລາຍແຂວງ ໂດຍສະເພາະ ທາງພາກເໜືອ ເຫັນວ່າ ເປັນໂຄງການທີ່ໄປຮອດໄປເຖິງປະຊາ ຊົນຢ່າງແທ້ຈິງ ບໍ່ສະເພາະແຕ່ສາມາດ ປຸກລະດົມຂະບວນການອະນຸລັກໃບລານ ທີ່ນັ້ນ ແຕ່ຍັງເຮັດໃຫ້ ວຽກງານວັດທະ ນະທຳ ໃນຫລາຍແຂວງ ມີອັນພົ້ນເດັ່ນ".

ຈາກຜົນສຳເລັດໃນ 1 ປີ ໄດ້ ກາຍເປັນອະນິສົງອັນຍິ່ງໃຫຍ່ ທີ່ເຮັດໃຫ້ ໂຄງການປົກປັກຮັກສາໜັງສືໃບລານ ກ້າວໄປສູ່ປີທີ 6 ດ້ວຍຄວາມໝັ້ນຄົງ ເຕັມປ່ຽມໄປດ້ວຍພະລັງແຫ່ງການ ອະນຸລັກຮັກສາ ຟື້ນຟູ ແລະ ສົ່ງເສີມ.



# ຄົ້ນຄຳພີ ເພັບຂອງດີ ທີ່ແຂວງບໍ່ແກ້ວ

*ໂດຍ : ສ. ວົງສະຫວ່າງ*

ແຂວງທີ່ຂຶ້ນຊື່ລືຊາ ວ່າມີແກ້ວປະເສີດຫລາຍ ກໍ່ແມ່ນແຂວງບໍ່ແກ້ວ ແຕ່ສິ່ງຫນຶ່ງທີ່ປະທັບໃຈກວ່າ ແມ່ນທິວທັດທຳມະຊາດ ແລະ ວັດທະນະທຳ ຂອງພີ່ນ້ອງບັນດາເຜົ່າ. ແຂວງບໍ່ແກ້ວຕັ້ງຢູ່ທິດຕາເວັນຕົກສຽງເຫນືອ ຂອງປະເທດເຮົາ ປະກອບດ້ວຍເມືອງເມິງ, ຕົ້ນເຜີ້ງ, ຫ້ວຍຊາຍ, ຜາອຸດົມ ແລະເມືອງປາກທາ. ປະຊາຊົນສ່ວນຫລາຍແມ່ນເຮັດໄຮ່, ເຮັດນາ, ຄ້າຂາຍ ແລະ ແລ່ນເຮືອທາງຍາວແຕ່ລະເຂດເມືອງ ມີຄວາມສະດວກ ແລະ ຂໍ້ຫຍຸ້ງຍາກແຕກຕ່າງກັນ ທາງຄົມມະນາຄົມບໍ່ສະດວກ ຕົກຍາມລະດູຝົນບໍ່ສາມາດໄປມາຫາສູ່ກັນໄດ້ລະຫວ່າງເມືອງຕໍ່ເມືອງໂດຍທາງລົດ ແຕ່ໄປໄດ້ໂດຍທາງເຮືອ ຫນ່ວຍສຳຫລວດພວກເຮົາໄປເຮັດວຽກທີ່ແຂວງບໍ່ແກ້ວເທື່ອນີ້ ພວມກົງກົບລະດູຝົນ ການໄປມາເລີ່ມມີຄວາມລຳບາກ ໄປທາງລົດກໍ່ສ່ຽງຕໍ່ໄພທຳມະຊາດ, ລາຄາລົດໂດຍສານພວມກົບຕົວສູງ ສິນຄ້າເຫນັງຕີງຢ່າງແຮງ, ເຄື່ອງອຸປະໂພກບໍລິໂພກສຳເລັດຮູບ ສ່ວນຫຼາຍເອົາມາແຕ່ປະເທດໄທ ແຕ່ທາງດ້ານວັດທະນະທຳນັ້ນ ຍັງຄົງມີຊີວິດຊີວາ ຍຶດກຶການໃຫ້ທານຮັກສາສິນ ຕາມຮີດຄອງ ພະສົງສຳມະເນນ ຍັງບວດຮຽນຂຽນອ່ານກັນຫລາຍຢູ່ ແຕ່ຕົວທຳນັ້ນກໍ່ບໍ່ຄ່ອຍມີຜູ້ອ່ານໄດ້ຫລາຍປານໃດ.

ດັ່ງນັ້ນການຄົ້ນຄວ້າດ້ານອັກສອນທຳ ແລະຕົວລາວບູຮານ ທີ່ມີຢູ່ໃນເຂດນີ້ຈຶ່ງບໍ່ເລີກເທົ່າທີ່ຄວນ ຜົ່ຫນ່ວຍສຳຫລວດເຮົາໄປຄົ້ນເຫັນ ກໍ່ມີຫລາຍຄົນສົນໃຈ ແລະ ຢາກໄດ້ ເຊັ່ນ: ຕຳລາຢາບູຮານຢູ່ວັດຮົ່ມໂພສະວ່າງ ບ້ານທາດສະມີຫລາຍຕຳລາທີ່ຫນ້າສົນໃຈ ຕົວຢ່າງ:

- ຢາດີຫນີ້ວຍ່ຽວເຈັບ: ໃຫ້ເອົາພວງພົ້ແດງ+ຫົວແຫ້ວຫມູ+ຮາກແຫນງນ້ຳ+ເຂົ້າຈ້າວ+ອ້ອຍດຳ ຕົ້ມກິນດີແລ.
- ຢາດີຍ່ຽວເປັນເລືອດ: ເອົາຕົ້ນຕາເສືອ ຕົ້ມແລ້ວເອົານ້ຳເຜີ້ງຕັດ ກິນດີແລ.
- ຢາດີໄຟໄຫມ້ນ້ຳຮ້ອນລວກ: ໃຫ້ເອົາໃບຂາມປ້ອມມາເຜົາເປັນເທົ່າ ແລ້ວບົດ



ໃສ່ນ້ຳມັນງາ ທາດີແລ.

- ຢາດີໄຟໄຫມ້ອີກຢ່າງຫນຶ່ງ ປ້ອງກັນແປ້ວນຳ ເພິ່ນໃຫ້ເອົາໃບຜັກກາດຕຳແລ້ວປັ້ນເອົານ້ຳ, ເອົານ້ຳນົມຄົນມາອື້ວເຂົ້າກັນໃຫ້ແຫ້ງ ແລ້ວມາທາດີແລ.
- ຢາດີໄສ້ລົງທ້ຳ: ໃຫ້ເອົາທອງສະຫມຸດຂາວ ຕົ້ມກິນດີແລ.

ຍັງມີຫລາຍຕຳລາທີ່ເຫມາະສົມກັບຊີວິດບ້ານພວກເຮົາ ທາງາຍບໍ່ຈ່າຍແພງເມື່ອຄົ້ນພົບແລ້ວ ແມ່ນໃຜໆກໍຢາກໃຫ້ອ່ານແລ້ວຢາກຈົດເອົາ ແຕ່ພວກເຮົາບໍ່ມີເວລາພໍທີ່ຈະຈົດກ່າຍໄດ້ຫມົດ, ມີແຕ່ຫມາຍກ່າຍໄມໂຄຼຟິມໄວ້ເທົ່ານັ້ນ.

ນອກນັ້ນ ກໍ່ມີປະເພດສຸພາສິດ, ຄຳສອນຕ່າງໆ ເຊັ່ນ: ປູ່ສອນຫລານ, ໄມ້ສີ່ຫລ່ຽມ ຕົວຢ່າງ: ເຫດອັນຈັກພາໃຫ້ຈິບຫາຍ ມີ 7 ຢ່າງ :

- ຄຽດແລ້ວມັກທຸບມັກຕີເຂົ້າຂອງໃນເຮືອນ ກໍ່ຈິບຫາຍ
- ມັກກະທຳຮ້າຍແກ່ລູກເມຍ ຂ້ອຍຄົນ ກໍ່ຈິບຫາຍ
- ມັກຄ້ານ ແລະ ມັກກິນ ກໍ່ຈິບຫາຍ
- ມັກຫລິ້ນຫມາກລຸກ ຫມາກສະກາ (ການພະນັນ) ກໍ່ຈິບຫາຍ
- ໂກງຍິງ - ໂກງເຫລົ້າ (ເລງສຸລາ-ນາລີ) ກໍ່ຈິບຫາຍ
- ຄຸນບໍ່ມີໃນຕົນແລ ກູ້ທ່ານໄປກິນທົ່ວບ້ານທົ່ວເມືອງ ກໍ່ຈິບຫາຍ
- ໂຈນຄຳລະຫັດ ມັກປອງຮ້າຍແກ່ທ່ານ ກໍ່ຈິບຫາຍ

ແລະ ມີເລື່ອງຕ່າງໆ ອາຍຸເກົ່າແກ່ ເຊັ່ນ: ສຸພຣົມມະໂມກຂະ ມີ 10 ຜູກ ຈ.ສ. 1125 ມີອາຍຸໄດ້ 235 ປີ, ນອກນັ້ນ ກໍ່ມີລຳພະເວສສັນຕຣະຊາດົກ ໃນສະບັບຕ່າງໆ ເຊັ່ນ:





- ເວສສັນຕຣະຊາດົກ ສະບັບວິງວອນ
- ເວສສັນຕຣະຊາດົກສະບັບປ່າຊາງ
- ເວສສັນຕຣະຊາດົກ ສະບັບອ່າຍທົ່ງແກ້ວ
- ເວສສັນຕຣະຊາດົກ ສະບັບຈະຣິຍາ
- ເວສສັນຕຣະຊາດົກ ສະບັບອ່າຍຄຳນ້ອຍ
- ເວສສັນຕຣະຊາດົກ ສະບັບໄຂເລັ້ມ
- ເວສສັນຕຣະຊາດົກ ສະບັບຕະໂຄ່ງ

ແຕ່ລະຊຸດ ແຕ່ລະສະບັບ ເຖິງວ່າແມ່ນເລື່ອງພະເວດຄືກັນ ແຕ່ມີຄວາມຫລາກຫລາຍທາງສິລະປະການປະພັນສອດແຊກການດຳລົງຊີວິດຂອງຄົນໃນທ້ອງຖິ່ນເຂົ້າໃນເນື້ອເລື່ອງ ມີບາງສະບັບຫມາຂອງນາຍພານເຈຕຕະບຸດ ມີເຖິງ 32 ໂຕ ແຕ່ລະໂຕຄຸນນະພາບພິລຶກ (ຫມາຕຳລວດຍັງທາທຽບຍາກ) ນັ້ນຫມາຍຄວາມວ່າ ແຂວງນີ້ ມີນັກປາດອາຈານ ທີ່ເຄີຍກ່າຍທອດ ພູມປັນຍາທາງດ້ານວັດທະນະທຳໃຫ້ແກ່ປະຊາຊົນຮຸ່ນກ່ອນມາແລ້ວ ຢ່າງຫນ້ອຍກໍ່ສອງຮ້ອຍກວ່າປີ ປະຊາຊົນເຂດນີ້ ຈົນອອກປາກວ່າ : " ມັນສົມຄວນໄດ້ຮັບການປົກປັກຮັກສາ ແລະ ເສີມຂະຫຍາຍມາແຕ່ດົນແລ້ວ ຂໍໃຫ້ພະສົງອົງຄະເຈົ້າເຫດຕົວທຳຄືນ ເອົາສິລະທຳເຂົ້າຈິດໃຈຂອງຄົນຮຸ່ນໃຫມ່ ໃຫ້ຫລາຍກວ່ານີ້ "

# ປີສຸດທ້າຍທີ່ແຂວງຫລວງພະບາງ



**ເຂດຜາໂຄມ :**

ໃນຂະນະທີ່ຈຸຫນຶ່ງສຳຫລວດຢູ່ວັດໃຫມ່ ອີກຈຸຫນຶ່ງແຍກອອກມາສຳຫລວດຢູ່ອ້ອມຂ້າງຕົວເມືອງຫລວງພະບາງ ຄື: ເຂດຜາໂຄມ.

ເຂດນີ້ໂຄງການເຄີຍມາສຳຫລວດແລ້ວໃນທ້າຍປີ 1995 ຈຶ່ງເປັນເຫດໃຫ້ຊາວບ້ານ ແລະພະສົງ ມີຄວາມເຂົ້າໃຈຢ່າງດີ ເມື່ອເວລາໂຄງການໄປຮອດກໍ່ໄດ້ຮັບການຕ້ອນຮັບຢ່າງອົບອຸ່ນ ຈາກອຳນາດການປົກຄອງ ແລະພະສົງ ໂດຍສະເພາະສາທຸໃຫຍ່ ຄຳພັນ ປະທານ ພ.ສ.ລ. ເຂດ ໄດ້ເຂົ້າຮ່ວມພິທີສະຫລຸບໃນແຕ່ລະວັດ ໂອກາດນີ້ສາທຸກໍ່ໄດ້ໂອ້ລົມ ແລະປຸກລະດົມຂະບວນການຂອງຊາວບ້ານເຂົ້າໃນການອະນາໄມ ແລະຮ່ວມມືກັບຫນ່ວຍສຳຫລວດ ເຊິ່ງກໍ່ເຫັນວ່າໄດ້ຮັບຜົນຢ່າງດີ.

ຢູ່ເຂດນີ້ກໍ່ຄືເຂດເທສະບານເມືອງຫລວງພະບາງ ຄື: ເປັນເຂດທີ່ຮຸ່ງເຮືອງທາງດ້ານສາສະຫນາ ມີວັດຢູ່ທຸກບ້ານ ແຕ່ບາງວັດຂາດພະສົງດູແລ ຈຶ່ງເຮັດໃຫ້ເອກະສານແຕກມັດແຕກຜູກ, ບາງວັດກໍ່ເກັບມ້ຽນໃນຕູ້ຄຳພີເກົ່າແກ່ ແຕ່ຍ້ອນບໍ່ຄ່ອຍເອົາມານຳໃຊ້ຈຶ່ງເຮັດໃຫ້ໂກນ, ງ່ ແລະ ຊຳຫລຸດເສຍຫາຍໄປບາງຜູກ.

ໃນເຂດນີ້ ຫນ່ວຍສຳຫລວດໄດ້ເລືອກເຟັ້ນ 8 ວັດ ເພື່ອສຳຫລວດ ຄື: ວັດນາຫລວງ, ຊຽງເຫລັກ, ຊ່າງຄ້ອງ, ຫນອງຊາຍ, ຄຸນສະຫວ່າງ, ຄົກວ່າ, ຄຸນວິເສດ, ໂຄມເສລາສະຫວາດ, ໂພນທັນ ແລະ ວັດບ້ານດອນໃຫມ່ ຫນັງສືທີ່ພົບເຫັນສ່ວນຫລາຍ ຈະມີເນື້ອໃນຄ້າຍຄືກັບຢູ່ເທສະບານຫລວງພະບາງ ເຊັ່ນ: ນິບາດ, ຊາດົກ, ມະຫາມູນລະນິພພານ ...

ເລີ່ມແຕ່ວັນທີ 14 ເດືອນກໍລະກົດ ເຖິງ ວັນທີ 13 ເດືອນກັນຍາ 1997 ທີ່ຫນ່ວຍສຳຫລວດໄດ້ເຄື່ອນໄຫວຢູ່ເຂດໂຄມຂວາງ ສາມາດປົກປັກຮັກສາຫນັງສືໃບລານໄດ້ 5.024 ຜູກ ໃນນີ້ມີເອກະສານສຳຄັນ ແລະ ເກົ່າແກ່ຫລາຍຜູກ ເຊັ່ນ: "**ທັມມະບົທ**" ອາຍຸ 314 ປີ "**ເວສສັນຕອະຊາດົກ**" (ປາລີ) " **ມະໄລໂຜດສັດ**" ອາຍຸ 308 ປີ "**ເຈຕນາເຜທາ**" ອາຍຸ 336 ປີ.

**ເມືອງນ້ຳບາກ :**

ເມືອງນ້ຳບາກ ເປັນເມືອງຫນຶ່ງທີ່ເຄີຍຖືກສົງຄາມທຳລາຍຢ່າງຫນັກຫນ່ວງໃນສະໄຫມກ່ອນ ເປັນສາເຫດເຮັດໃຫ້ວັດວາອາຮາມ ຖືກເຜົາຜານເກືອບທຸກວັດ ຫນັງສືຜູກໃບລານກໍ່ໄດ້ຮັບຊະຕາກຳອັນດຽວກັນ. ພາຍຫລັງສົງຄາມສິ້ນສຸດລົງ ເພື່ອໃຫ້ພະສົງມີຫນັງສືເທດ ຫນັງສືສູດ ໃຫ້ແກ່ອອກຕົບຍາດໂຍມ ຈຶ່ງໄດ້ມີການນຳເອົາຫນັງສືໃບລານມາຈາກເມືອງຫລວງພະບາງຈຳນານຫນຶ່ງ ເອກະສານໃບລານຢູ່ເມືອງນ້ຳບາກ ຈຶ່ງບໍ່ມີຫລາຍ ທ້າວ ຄຳມຸກ ສີລີອາໄພ ຜູ້ຊ່ວຍນັກສຳຫລວດ ຜູ້ທີ່ໄດ້ສຳຫລວດຕົວຈິງ ໄດ້ໃຫ້ທັດສະນະວ່າ "ຕາມການສຳຫລວດຕົວຈິງ ເຫັນວ່າເອກະສານສ່ວນຫລາຍ ມີລັກສະນະຄ້າຍຄືກັບເອກະສານຢູ່ຫລວງພະບາງ ເພາະວ່າຊື່ຜູ້ສັດທາສ້າງ ແລະ ຜູ້ລິດຈະນາທີ່ພົບເຫັນຢູ່ນີ້ ແມ່ນຊື່ດຽວກັນກັບທີ່ມີຢູ່ໃນເມືອງຫລວງພະບາງ, ລາຍມືຜູ້ຂຽນກໍ່ຄ້າຍຄືກັນ ຂ້າພະເຈົ້າເຄີຍເຫັນລາຍມືແບບນີ້ ຢູ່ວັດໃຫມ່ຫລວງພະບາງ ເນື້ອໃນທີ່ພົບເຫັນສ່ວນຫລາຍເປັນປະເພດຫນັງສືສູດຕ່າງໆ ເຊັ່ນ: ມູນລະນິພພານ, ນິພານະສຸດ, ທຳມະທົ່ວໄປ ...

ເຖິງວ່າຈະເປັນເມືອງທີ່ມີຫນັງສືຫນ້ອຍ ແຕ່ປະຊາຊົນເຂົາເຈົ້າຜັດມີສະຕິຕື່ນຕົວສູງໃນການປົກປັກຮັກສາ ສະແດງອອກບ່ອນວ່າ ແຕ່ລະວັດຈະມີຕູ້ເກັບມ້ຽນຫນັງສືເປັນຢ່າງດີ ໂດຍໄດ້ມາຈາກສັດທາຂອງຊາວບ້ານເອງ, ຫນັງສືກໍ່ມີການຫຸ້ມຫໍ່ດ້ວຍຜ້າຄຳພີທີ່ຕ່ຳດ້ວຍຝີມືອັນງົດງາມ, ແຕ່ລະຕູ້ຄຳພີກໍ່ຈະມີກຸນແຈໃສ່ ໂດຍມີຄະນະຮັບຜິດຊອບທີ່ມາຈາກພະສົງ, ສາລະວັດ ແລະ ນາຍບ້ານ ເປັນຜູ້ເກັບມ້ຽນ ຖ້າມີການຢືມ ຫລືການກວດກາ ກໍ່ຕ້ອງໄດ້ອະນຸຍາດຈາກຄະນະຮັບຜິດຊອບ ໂດຍສະເພາະ ນາຍບ້ານເສຍກ່ອນ ດັ່ງນັ້ນ ຈຶ່ງເຮັດໃຫ້ຫນັງສືໃບລານ 90% ຢູ່ໃນສະພາບທີ່ດີ.

ເນື່ອງຈາກມີການເຜີຍແຜ່ວຽກງານຂອງໂຄງການປົກປັກຮັກສາຫນັງສືໃບລານຢ່າງກວ້າງຂວາງ ປະກອບກັບໄດ້ຮັບການຮ່ວມມືຈາກທາງວັດທະນະທຳເມືອງນ້ຳບາກ ຈຶ່ງເຮັດໃຫ້ການເຄື່ອນໄຫວຂອງຫນ່ວຍສຳຫລວດ ແຕ່ວັນທີ 16 ກໍລະກົດ ຫາ 5 ສິງຫາ 1997 ໄດ້ຮັບການຮ່ວມມືຈາກທຸກພາກສ່ວນ ໂດຍສະເພາະພະສົງ ແລະ ຊາວບ້ານ ການສຳຫລວດໃນ 8 ວັດຄື: ວັດໂພນສະອາດ, ຈອມແຈ້ງ, ໂພນໄຊ, ບ້ານໂຄ້ງ, ຜູ່ໄທຄຳໄຊຍາຣາມ, ສັກກາລະນະຄອນ, ນ້ຳງາລືມໃຕ້ ແລະ ວັດສີມຸງຄຸນ ປະສົບຜົນສຳເລັດພໍສົມຄວນ ມີຫນັງສືໃບລານທີ່ໄດ້ຮັບການສຳຫລວດ 928 ຜູກ ໃນນີ້ ມີຫນັງສືທີ່ເປັນຂອງຊາວບ້ານຈຳນວນຫນຶ່ງ ໄດ້ຂຶ້ນ

ທະບຽນນຳ ໂດຍສະເພາະຢູ່ວັດສັກກາລະນະຄອນ ມີຫລາຍຄົນທີ່ມີຄວາມເຂົ້າໃຈ ນຳເອົາໜັງສືທີ່ເປັນມູນມັງຂອງຕົນ ເຊັ່ນ: ຈານຊຽງຄຳ, ຊຽງເພັງ, ຊຽງຮຸ່ງ, ຊຽງອ່ອນ ເຊິ່ງສ່ວນຫລາຍເປັນປະເພດວັນນະຄະດີເກົ່າແກ່ ເຊັ່ນ: *ເລື່ອງນາງແຕງອ່ອນ, ທ້າວລິນທອງ, ນາງຜົມຫອມ, ທ້າວໄຊຍະຈັກ, ຈຳປາສີ່ຕົ້ນ, ນົກກະຈອກນ້ອຍ,* ມາຂຶ້ນບັນຊີຮ່ວມກັບທາງວັດ.





ຈາກພື້ນຖານຄວາມສັດທາຂອງຊາວເມືອງນ້ຳບາກ ທີ່ມີຕໍ່ໜັງສືໃບລານ ບວກກັບການປົກປັກຮັກສາໜັງສືໃບລານ ທີ່ໜ່ວຍສຳຫລວດໄດ້ຟື້ນຟູ ເຮັດໃຫ້ບັ້ນສະຫລຸບ (ພິທີຄາລະວະທຳ) ຢູ່ແຕ່ລະວັດ ແຕ່ລະບ້ານ ມີຊາວບ້ານບໍ່ວ່າຈະເປັນເຖົ້າແກ່, ແມ່ຍິງ ແລະເດັກນ້ອຍ ເຂົ້າຮ່ວມເປັນຂະບວນຟົດຟື້ນ ກາຍເປັນປາງບຸນອັນຍິ່ງໃຫຍ່ ຄ້າຍຄືວ່າແມ່ນການສະເຫລີມສະຫລອງໃຫ້ແກ່ຊີວິດໃໝ່ຂອງໜັງສືໃບລານ ເປັນສັນຍາລັກຂອງຄວາມຮ່ວມມື, ຄວາມເຂົ້າໃຈ ແລະ ຄວາມຕື່ນຕົວ ຫລາຍຄົນທີ່ເຂົ້າຮ່ວມບັ້ນສະຫລຸບ ອົດບໍ່ໄດ້ທີ່ຈະເອີ່ຍວ່າ: **"ເປັນເຫດການທີ່ບໍ່ເຄີຍເຫັນມາກ່ອນ, ແຕ່ກ່ອນຜູ້ຍິງບໍ່ໄດ້ຈັບໄດ້ບາຍ ມາບັດນີ້ກໍໄດ້ມາຊ່ວຍເຊີດຊູຮ່ວມກັບຜູ້ຊາຍ, ຈາກການສຳຫລວດຄັ້ງນີ້ ຍິ່ງເຮັດໃຫ້ພວກເຮົາຮູ້ຄຸນຄ່າຂອງໜັງສືໃບລານຫລາຍຂຶ້ນ "**

**ເມືອງປາກອູ ແລະ ຊຽງເງິນ :**

ສຳຫລັບຢູ່ເມືອງປາກອູ ໜ່ວຍສຳຫລວດ ໄດ້ສຳຫລວດພຽງ 2 ວັດຄື: ວັດຊ່າງໄຫ ແລະ ວັດປາກອູ ໂດຍເລີ່ມແຕ່ວັນທີ 17 ເຖິງ 27 ກັນຍາ 1997.

ໃນຈຳນວນ 2 ວັດນີ້ ວັດປາກອູ ເປັນວັດທີ່ມີໜັງສືຫລາຍກວ່າໝູ່ ມີ 799 ຜູກ, ໃນນີ້ ມີເອກະສານສຳຄັນຫລາຍເລື່ອງ **"ອຸປະຄຸດຫລວງ" "ໄມມີກກະສາ"** (ອາຍຸ 144 ປີ) 10 ວັນ ຂອງການເຄື່ອນໄຫວ ມີໜັງສືທີ່ສຳຫລວດທັງໝົດ 907 ຜູກ.

ກ່ອນຈະເຄື່ອນຍ້າຍໄປສູ່ແຂວງບໍ່ແກ້ວ ໃນຕົ້ນເດືອນຕຸລາ 1997 ໜ່ວຍສຳຫລວດໄດ້ຄັດເລືອກ 2 ວັດຄື: ວັດບ້ານແອນສະຫວັນ ແລະ ວັດລ້ອງອໍ້ ເມືອງຊຽງເງິນ ເປັນຈຸດສຸດທ້າຍຂອງການສຳຫລວດຢູ່ແຂວງຫລວງພະບາງ ເຊິ່ງເມືອງຊຽງເງິນນີ້ ໂຄງການປົກປັກຮັກສາ ໜັງສືໃບລານ ເຄີຍໄດ້ສຳຫລວດແລ້ວໃນປີ 1994 ຮວມໜັງສືທີ່ໄດ້ສຳຫລວດທັງສອງວັດມີ 804 ຜູກ ຮວມມີ 251 ເລື່ອງ.

# ○ ມອບທຶນສຶກສາສົງ ແຂວງບໍ່ແກ້ວ

*ໂດຍ : ຄຳສິງ*

ໃນຕອນເຊົ້າ ຂອງວັນທີ 8/5/98 ຢູ່ທີ່ຫ້ອງການວັດທະນະທຳ ແຂວງບໍ່ແກ້ວ ໄດ້ມີພິທີມອບທຶນສຶກສາສົງ ໂດຍທ່ານ ບຸນເລີດ ທຳມະຈັກ ຕາງໜ້າໃຫ້ໂຄງການປົກປັກຮັກສາໜັງສືໃບລານລາວ ເປັນຜູ້ກ່າວມອບ ທ່ານ ສີແພງ ວົງປັນຍາ ຫົວໜ້າພະແນກກະແຫລງຂ່າວ ແລະ ວັດທະນະທຳ ແຂວງບໍ່ແກ້ວ ເປັນຜູ້ກ່າວຮັບ ເປັນສັກຂີພິຍານໃນການມອບ-ຮັບຄັ້ງນີ້ ມີປະທານ ພ.ສ.ລ ແຂວງ, ແນວໂຮມແຂວງ, ສຶກສາແຂວງ, ພ້ອມດ້ວຍພະນັກງານຫ້ອງການ ວັດທະນະທຳແຂວງ ແລະ ນັກສຳຫລວດໜັງສືໃບລານ ກໍ່ໄດ້ເຂົ້າຮ່ວມການມອບ-ຮັບຄັ້ງນີ້ ເປັນເງິນສົດຈຳນວນ 3.506.000 ກີບ. ຊຶ່ງໄດ້ຮັບການອະນຸມັດ ຈາກລັດຖະບານ ສ.ສ. ເຢຍຣະມັນ ໂດຍຜ່ານໂຄງການປົກປັກຮັກສາໜັງສືໃບລານລາວ (ການຮ່ວມມື ລາວ-ເຢຍຣະມັນ) ເພື່ອເປັນທຶນຊຸກຍູ້ສົ່ງເສີມການສຶກສາຮ່ຳຮຽນ ຂອງພະສົງສຳມະເນນພາຍໃນແຂວງບໍ່ແກ້ວ ທຶນດັ່ງກ່າວຈະໄດ້ແບ່ງໃຊ້ຈ່າຍເຂົ້າໃນສອງລາຍການ ຄື :

1. ອຸປະກອນການສິດສອນ
2. ຄ່າແຮງງານຊຸກຍູ້ຊົ່ວໂມງສິດສອນ ຂອງຄູອາຈານ

ເງິນທັງສອງລາຍການນີ້ ຈະມີການຕິດຕາມລາຍງານ ການໃຊ້ຈ່າຍລະອຽດ ນອກນັ້ນກໍ່ຍັງໄດ້ຕິດຕາມຂ່າວການສຶກສາ ແລະ ສອບເສັງຂອງພະສົງສຳມະເນນໃນແຂວງນີ້ອີກຕື່ມ ເພື່ອສະຫລຸບລາຍງານຜົນໄດ້ຮັບໃນການຮ່ຳຮຽນ.





# ນິຕິທັມຄຳກອນ

(ຄັດຈາກໃບລານ ວັດໂຄມທີນ ແຂວງຫລວງພະບາງ)

*ໂດຍ : ມະຫາ ບຸນເລີດ ທຳມະຈັກ*

ປາກໃດເກີນບໍ່ມີຄຳຮູ້ ມັກລິບລູ່ຄວາມມ່ວນຈິບຫາຍ
ມີອຸບາຍຍ້ອມແດງດ້ວຍຫມາກ ປາກອັນນັ້ນມັກປຣາດນິນທາ
ມັນເກີດມາມີປາກອັນເປົ່າ ຄືປາກເຕົ່າ ປາກກຸ້ງ ປາກຫອຍ
ປາກອັນໃດຮຽນທຳຮູ້ມາກ ບໍ່ລຳບາກຟັງມ່ວນເຢັນໃຈ
ປາກນຳໃຜເຊື່ອມເຢັນຄືນ້ຳ ມັກປຣາດເຈົ້າຍໍຍ້ອງວ່າດີ
ປາກມີສີຮຸ່ງເຮືອງວິລາດ ປາກສະອາດ ຄຸນລົ້ນລື່ນປະມານ
ຂອງບໍ່ງາມມີນາມຫລາຍຢ່າງ ສະເປົ່າວ່າງຫານ້ຳບໍ່ມີ
ເປັນບຸຣີທາພຍາບໍ່ໄດ້ ເປັນຕົ້ນໄມ້ໃບທ້ຽນຫລ່າໂສມ
ເປັນງົວນົມຣີດນ້ຳບໍ່ຍ້ອຍ ເປັນສາວຈ້ອຍປະປ່ອຍເປືອຍໂຕ
ມະທິງໄສບໍ່ງາມຄວາມປຽບ ເພິ່ນທຽບໄວ້ຄືດັ່ງວາຈາ
ຄຳມຸສາໂກທາສໍ່ສຽດ ໃຫ້ເພິ່ນຄຽດງາມນ້ອຍບໍ່ດີ ຈິ່ງນາ
ວິຊາການຮຽນເອົາບໍ່ໄດ້ ເພິ່ນກ່າວໄວ້ມີເຈັດປະການ
ເດຍລະສານກັບຄົນປະມາດ ຄົນຂີ້ຄ້ານມັກຫລັບມັກນອນ
ຄົນອາທອນປ່ວຍໄຊພະຍາດ ຄົນອຸບາດມັກງ່າຍໃນກິດ
ຄົນເຫັນຜິດທຳການບໍ່ເຊື່ອ ຄົນບໍ່ເຊື່ອບໍ່ຊອບວິຊາ
ເປັນສິດທາໃຫ້ຄູເຫັນຊອບ ໃຫ້ປະກອບຄຸນໄວ້ທ້າອັນ ດັ່ງນີ້
ຢ່າດື້ດ້ານນອນຕື່ນກ່ອນຄູ ອຸປະກາກລ້ຽງດູຜ້າຜ່ອນພຽນທຳ
ບໍ່ກຽງຄຳຄູບາສອນງ່າຍ ບໍ່ປ່ຽງບ້າຍຫລິບຫລີກການງານ
ຄູອາຈານສອນທຳໃຫ້ຮູ້ ອຸດສາສູ້ໃຈນ້ອມຫມັ່ນພຽນ
ອຸດສາຮຽນຢ່າຫລິງມັກມາກ ຮຽນສິນຍາກຄຳຮູ້ບໍ່ຈຳ
ສິດອະທຳດັ່ງຄົນປາກກືກ ຟັງເຫັນກຶກແມ່ນແກ້ບໍ່ເປັນ
ອຸປະມາຄົນຮຽນທຳມາກ ຮຽນແຕ່ປາກຄວາມຮູ້ບໍ່ສິງ
ຝູງຊາຍຍິງກຸມທາຄວາມເວົ້າ ເປັນເຄົ້າເມົ້າຂາຍຫນ້າທົ່ວດິນ
ສາດຕະສິນຄືໂຕຄຳຮູ້ ຢູ່ໃນຕູ້ໃນພັບໃບລານ
ບໍ່ແກ່ນສານແຕ່ງການບໍ່ໄດ້ ຄືເຮົາໄວ້ຝາກຊັບເງິນຄຳ
ວາງປະຈຳໄວ້ມີຄົນອື່ນ ຍາກລົ້ນລື່ນຄຳຮ້ອນແລ່ນທາ
ເຫັນພຶກສາບາງພັນຍາກ ພາກຫນຶ່ງນັ້ນຍົກຍ້ອງຍໍຄຸນ
ເຫັນສັດຕູຕົນຊັງຂຶ້ງຄຽດ ພາກຫນຶ່ງນັ້ນດ່າສຽດສູ້ຕົນ

ອ່ານຕໍ່ຫນ້າ 20



ກຳໃຫ້ຜິນເກິ່ງກັນສະເຫມີພາກ
ໃຈນັກປຣາດບິດລ້ຽວຕ່າງກັນ
ຄວາມສຳຄັນເຫັນກະຈົກວ່າແກ້ວ
ຄັນພົບແກ້ວກັບວ່າກະຈົກ
ສັດນາລົກຫາສິນບໍ່ໄດ້
ເພິ່ນກ່າວໄວ້ຝູງນັ້ນບໍ່ໃຊ່ຄົນ
ຜູ້ເປັນຄົນບັນດິດນັກປຣາດ
ເພິ່ນອີງອາດຍຶດໄວ້ກ້ອຍຄຳ
ເຫັນກະຈົກວ່າກະຈົກບໍ່ແຄ້ວ
ເຫັນຫນ່ວຍແກ້ວຍືນແກ້ວບໍ່ວາງ
ທຳເປັນກາງຊື້ທາງນັກປຣາດ
ຄວາມສະຫລາດສາມສິ່ງທຽມຕົນ
ຫນຶ່ງບໍ່ຣົນນຳຂອງທາຍາກ
ສອງບໍ່ຮ້ອນນຳສິ່ງຈິບຫາຍ
ສາມຈັກກາຍມີສະຕິບໍ່ຫລ່າ
ບໍ່ຕັ້ງວ່າຜູ້ນັ້ນແກ່ນຄົນ
ອະນຸຊົນຊີ້ທາງຊີ້ເຫດ
ອຸປະເທດຄົນໃບ້ຄົນພານ
ສາມປະການຈື່ຈຳເອົາໄວ້
ຫນຶ່ງຊີ້ໄຮ້ຫລົງໄລນການາ
ສອງໃຈຫານກຳລັງໂຕນ້ອຍ
ຢ່າຄຽດຄ້ອຍກົບຍ່ຳສຽງແຂງ
ແກ່ຄົນແຮງກວ່າຕົນຄວນຢ້ານ
ສາມຂີ້ຄ້ານຮຽນນ້ອຍບໍ່ຈຳ
ນັກຂືນຄຳກຽງຄົນຮູ້ນາກ
ດູພາກພື້ນຄົນກ່ອຍເລວຊາມ.


**ເຈົ້າຂອງ**

ໂຄງການປົກປັກຮັກສາຫນັງສືໃບລານລາວ
( ການຮ່ວມມື ລາວ-ເຢຍຣະມັນ )
ສຳນັກງານ
ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ
ຫໍສະຫມຸດແຫ່ງຊາດ
ຕູ້ ປ.ນ. 8818 ໂທ/ແຟັກ : (856-21) 21 3029

**ຄະນະຈັດທຳ**

ທີ່ປຶກສາ : ດາລາ ກັບລະຍາ
: ບຸນຍົກ ແສນສຸນທອນ
ຫົວຫນ້າບັນນາທິການ : ກົງເດືອນ ເນດຕະວົງ
ຮອງຫົວຫນ້າບັນນາທິການ : ບຸນເລີດ ທຳມະຈັກ
ຜູ້ຊ່ວຍບັນນາທິການ : ໂຂທອງ ຄຳອິນຊູ
: ຄຳສິງ ວົງສະຫວາງ
ຈັດຫນ້າຄອມພິວເຕີ : ຄຳປັກ ວົງສັກດາ
ຖ່າຍພາບ : ຄຳສິງ ວົງສະຫວ່າງ
: ຄຳມຸກ ສີລືອາໄພ